ກົມສົ່ງເສີມການຄ້າ
ກະຊວງ ອຸດສາຫະກຳ ແລະ ການຄ້າ

# ຄູ່ມື
# ພື້ນຖານການກະກຽມສົ່ງອອກ ສິນຄ້າກະສິກຳ ໄປ ສປ ຈີນ
# (ກໍລະນີການສົ່ງອອກ ເຂົ້າ ແລະ ສັດ)



2021

# ການສົ່ງອອກເຂົ້າໄປ ສປ ຈີນ



# ແຜນວາດຂັ້ນຕອນການສົ່ງອອກເຂົ້າໃຫຍ່ໄປ ສປ ຈີນ



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມສົ່ງເສີມການຄ້າ

---0586
ເລກທີ............/ກສຄ
ນະຄອນຫຼວງວຽງຈັນ, ວັນທີ.18.ກໍລະກົດ 2019.

**ຮຽນ:** ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້ານະຄອນຫລວງ ແລະ ແຂວງໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການສະໜອງເຂົ້າສານ 50 ພັນໂຕນ ຂອງ ສປປ ລາວ ໄປ ສປ ຈີນ.

- ອີງຕາມບົດບັນທຶກຊ່ວຍຈຳສະບັບເລກລົງວັນທີ 26 ມິຖຸນາ 2019, ທີ່ນະຄອນປັກກິ່ງ ສປ ຈີນ ກ່ຽວກັບການສະໜອງເຂົ້າສານລາວ ໄປ ສປ ຈີນ.

ກົມສົ່ງເສີມການຄ້າ, ກະຊວງອຸດສາຫະກຳ ແລະ ການຄ້າ ໃນຖານະຜູ້ຕາງໜ້າລັດຖະບານ ແລະ ຜູ້ປະສານງານ ຂໍຖືເປັນກຽດລາຍງານມາຍັງທ່ານຊາບວ່າ: ໃນການປະຕິບັດການສະໜອງເຂົ້າສານ ສປປ ລາວ ໄປ ສປ ຈີນຕາມການຕົກລົງເຫັນດີຂອງສອງລັດຖະບານລາວ ແລະ ຈີນ ມີດັ່ງນີ້:

1. ສປປ ລາວ ໄດ້ຮັບ ໂກຕາສົ່ງເຂົ້າສານ ໄປ ສປ ຈີນ ຈຳນວນ 50 ພັນໂຕນ ໃນກາງປີ 2019 ຫາ ກາງປີ 2021. ຊຶ່ງກົມສົ່ງເສີມການຄ້າໃນນາມຜູ້ປະສານງານຕາງໜ້າໃຫ້ລັດຖະບານລາວ ໄດ້ສຳເລັດການໄປຮ່ວມປຶກສາຫາລື ແລະ ລົງນາມໃນບົດບັນທຶກຊ່ວຍຈຳຮ່ວມກັບ China National Cereals, Oils and Foodstuffs Corporation (COFCO) ຂອງ ສປ ຈີນ ໃນລະຫວ່າງວັນທີ 25-29 ມິຖຸນາ 2019.

2. ເພື່ອຈະສົ່ງອອກເຂົ້າສານລາວໄປ ສປ ຈີນໄດ້ ບໍລິສັດທີ່ຈະສົ່ງອອກຕ້ອງຮັບປະກັນດ້ານຄຸນນະພາບຂອງສິນຄ້າໂດຍມີເງື່ອນໄຂຄື: ***ກ.*** ປະຕິບັດຕາມຂໍ້ກຳນົດເງື່ອນໄຂສຸຂານາໄມພືດກ່ຽວກັບການສົ່ງເຂົ້າລາວ ໄປ ສປ ຈີນ. ໂດຍແມ່ນກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ ສປປ ລາວ ເປັນເຈົ້າການນຳພາຈັດຕັ້ງປະຕິບັດ (ລາຍລະອຽດມີເອກະສານຄັດຕິດມາພ້ອມນີ້) ***ຂ.*** ບໍລິສັດທີ່ໄດ້ຜ່ານເງື່ອນໄຂທີ່ກ່າວມາຂ້າງເທິງນີ້ກໍລະນີສົນໃຈຄ້າຂາຍເຂົ້າກັບຝ່າຍຈີນຕ້ອງໄດ້ປະຕິບັດຕາມເງື່ອນໄຂຕ່າງໆທີ່ໄດ້ລະບຸໄວ້ໃນຮ່າງສັນຍາຊື້ຂາຍທີ່ຄັດຕິດມາພ້ອມນີ້. ***ຄ.*** ສ່ວນລາຄາຊື້-ຂາຍຕົວຈິງແມ່ນຂຶ້ນກັບລາຄາໃນຕະຫລາດໂລກ ແລະ ຄຸນນະພາບຂອງສິນຄ້າໃນແຕ່ລະໄລຍະໂດຍຜູ້ຊື້ຈະເຮັດສັນຍາໂດຍກົງກັບຜູ້ຂາຍ.

ດັ່ງນັ້ນ, ຈຶ່ງຖືເປັນກຽດແຈ້ງມາຍັງທ່ານເພື່ອຊາບ ແລະ ແຈ້ງໃຫ້ຜູ້ປະກອບກິດຈະການກ່ຽວກັບເຂົ້າທີ່ມີຄວາມສົນໃຈ, ພາຍໃນແຂວງທ່ານໄດ້ກະກຽມ ພ້ອມແຈ້ງຊື່ຜູ້ທີ່ສົນໃຈໃຫ້ກົມສົ່ງເສີມການຄ້າ ໃນເວລາອັນຄວນດ້ວຍ.

**ຫົວໜ້າກົມ**

ໄຊສົມເພັດ ນໍລະສິງ

ຕິດຕໍ່ພົວພັນ:
ກະຊວງອຸດສາຫະກຳ ແລະ ການຄ້າ,
ກົມສົ່ງເສີມ ການຄ້າ,
ນາງ ມະນີຈັນ ສອນຄຳໄຊ
Tel: 021 454 091
020 58888937

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

1976 – ຫອຄ

ເລກທີ:................/ຫອຄ.ກສຄ

ນະຄອນຫຼວງວຽງຈັນ, ວັນທີ: 13 ກັນຍາ 2019

## <u>ແຈ້ງການ</u>

ເຖິງ: ທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.

ເລື່ອງ: ມາດຖານເງື່ອນໄຂຂອງຫົວໜ່ວຍທຸລະກິດເຂົ້າ ແລະ/ຫຼື ໂຮງສີເຂົ້າ ທີ່ຈະສົ່ງ ເຂົ້າສານ ໄປ ສປ ຈີນ.

- ອີງຕາມສະໂນດນຳສົ່ງຈາກຫ້ອງການກະຊວງການຕ່າງປະເທດ ສະບັບເລກທີ 2054/ຫກ.ອປອ, ລົງວັນທີ 10 ກໍລະກົດ 2019, ກ່ຽວກັບຫນັງສືແຈ້ງຈາກກົມໃຫຍ່ພາສີ ສປ ຈີນ ຕໍ່ກັບເງື່ອນໄຂຈົດທະບຽນເປັນຜູ້ສົ່ງເຂົ້າສານ ລາວ ໄປ ສປ ຈີນ.

ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ ເພື່ອແຈ້ງຕໍ່ ໃຫ້ບັນຫົວໜ່ວຍທຸລະກິດເຂົ້າ ແລະ/ຫຼື ໂຮງສີເຂົ້າ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ທີ່ຈະສົ່ງອອກເຂົ້າສານລາວໄປ ສປ ຈີນ ຕ້ອງໄດ້ປະຕິບັດຕາມມາດຖານ ເງື່ອນໄຂດັ່ງນີ້:

1. ເງື່ອນໄຂພື້ນຖານ.

1.1 ຕ້ອງເປັນ ຫົວໜ່ວຍທຸລະກິດຖືກຕ້ອງຕາມກົດໝາຍ ແລະ ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດ ໃນກິດຈະການດັ່ງກ່າວ.

1.2 ກະກຽມບົດລາຍງານ ສະພາບການເຄື່ອນໄຫວ ຂອງທຸລະກິດໃນໄລຍະ 3 ປີ ຜ່ານມາ ໃນກໍລະນີທຸລະກິດທີ່ໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວ ຍັງບໍ່ຄົບ 3 ປີ ໃຫ້ສະຫນອງຂໍ້ມູນລະອຽດ ນັບແຕ່ມື້ສ້າງຕັ້ງເປັນຕົ້ນມາ, ແຈ້ງສະພາບການຜະລິດ, ກຳລັງຄວາມສາມາດການຜະລິດ, ປະລິມານຜະລິດຕົວຈິງໃນແຕ່ລະປີ ໃຫ້ແຍກເປັນປະເພດ ແລະ ປະລິມານສົ່ງອອກຕົວຈິງ ໃຫ້ແຍກປະເພດເຂົ້າສານ ແລະ ປະເທດທີ່ສົ່ງອອກ ແລະ ອື່ນໆ.

2. ລະບົບການບໍລິຫານຄຸນນະພາບ:

**2.1 ມາດຕາການບໍລິຫານ** ຕ້ອງມີລະບົບປ້ອງກັນການກັກກັນພະຍາດ, ຄວາມປອດໄພທາງດ້ານອາຫານ, ການບໍລິຫານບຸກຄະລາກອນ, ລະບົບກວດກາການນໍາໃຊ້ສານເຄມີ, ການວິໃຈ, ການຮັບວັດຖຸດິບ ແລະ ການກວດກາກ່ອນການສົ່ງອອກ. ໃນກໍລະນີເຂົ້າສານລາວທີ່ສົ່ງອອກໄປ ສປ ຈີນ ຫາກບໍ່ໄດ້ມາດຕະຖານ ຕາມທີ່ ສປ ຈີນ ກໍານົດ ແມ່ນຕ້ອງໄດ້ຖືກສົ່ງກັບ ສະນັ້ນ, ກ່ອນຈະສົ່ງເຂົ້າສານໄປ ສປ ຈີນ ຕ້ອງໄດ້ເຮັດບົດລາຍງານລະອຽດ ກ່ຽວກັບມາດຕະຖານການບໍລິຫານ ທີ່ກ່າວມາຂ້າງ ເພື່ອສົ່ງໃຫ້ຝ່າຍຈີນ.

**2.2 ການບໍລິຫານອົງກອນ** ຕ້ອງມີໜ່ວຍງານກວດກາສຸຂານາໄມພືດ ຂອງບໍລິສັດ, ໜ່ວຍງານ ຫລື ພະນັກງານກວດກາອາຫານປອດໄພ ແລະ ພະນັກງານທີ່ມີປະສົບການໃນການເຮັດສຸຂານາໄມ.

3. ການບໍລິຫານຄວາມປອດໄພຂອງວັດຖຸດິບ:

**3.1 ການຊື້ວັດຖຸດິບ** ກ່ອນຈະສົ່ງອອກ ເຂົ້າ ໄປ ສປ ຈີນ ບໍລິສັດ ແລະ/ຫຼື ໂຮງສີເຂົ້າ ຕ້ອງໄດ້ເອົາໃຈໃສ່ ກວດກາພະຍາດທີ່ເກີດຈາກເຂດທີ່ມາຂອງວັດຖຸດິບ ເພາະໃນເວລາສົ່ງອອກຕົວຈິງ ຕ້ອງໄດ້ປະຕິບັດ ຕາມລະບຽບສຸຂານາໄມພືດຂອງ ສປ ຈີນ ວາງອອກຢ່າງເຂັ້ມງວດ.

**3.2 ການກວດກາກ່ອນຮັບ ແລະ ການເກັບຮັກສາວັດຖຸດິບ** ກ່ອນການຮັບວັດຖຸດິບ (ເຂົ້າເປືອກ) ເຂົ້າສາງຕ້ອງໄດ້ມີການກວດກາພະຍາດ, ກວດຄວາມປອດໄພຂອງພືດ ຫລື ນໍາໃຊ້ກົນໄກການຄັດສິ່ງທີ່ເປັນພິດຮ້າຍອອກ, ຮັບປະກັນຄວາມປອດໄພຂອງວັດຖຸດິບ, ພ້ອມທັງມີການເກັບກໍາຂໍ້ມູນການກວດກາ ແລະ ຂໍ້ມູນການຄັດເອົາສິ່ງທີ່ເປັນພິດຮ້າຍອອກ.

4. ການບໍລິຫານການຜະລິດ:

**4.1 ສະພາບແວດລ້ອມ** ໃນຂອບເຂດການຜະລິດ ແລະ ສະພາບແວດລ້ອມອ້ອມຂ້າງ ບໍ່ຄວນມີສະພາບແວດລ້ອມທີ່ເຮັດໃຫ້ມີຄວາມສ່ຽງຕໍ່ຄວາມບໍ່ປອດໄພຂອງອາຫານ.

**4.2 ມາດຕະຖານຕໍ່ພະນັກງານ** ພະນັກງານທີ່ຮັບຜິດຊອບການຜະລິດ ຕ້ອງຮັບປະກັນ, ມີເງື່ອນໄຂທີ່ຕອບສະໜອງ ຕໍ່ຄວາມປອດໄພຂອງອາຫານ ແລະ ສຸຂານາໄມ.

**4.3 ການຄຸ້ມຄອງຂັ້ນຕອນການຜະລິດ** ຂັ້ນຕອນການຜະລິດ ຂອງບໍລິສັດ ແລະ/ຫຼື ໂຮງສີເຂົ້າ ແລະ ຕ້ອງປະຕິບັດຕາມຫຼັກການ, ມີຕົວເລກທີ່ຖືກຕ້ອງ ແລະ ຢັ້ງຢືນໄດ້, ຂອບເຂດການຜະລິດສາມາດຮັບປະກັນຄວາມປອດໄພຂອງອາຫານ, ມີວິທີແກ້ໄຂ ແລະ ຄວບຄຸມຄວາມສ່ຽງ ຫລື ສ້າງການລະບົບແກ້ໄຂຕໍ່ຈຸດທີ່ມີຄວາມສ່ຽງສູງ.

**4.4 ການຄວບຄຸມຄວາມປອດໄພ** ບໍລິສັດ ແລະ/ຫຼື ໂຮງສີເຂົ້າ ຕ້ອງໄດ້ຄວບຄຸມ ແລະ ມີການວິໃຈຕໍ່ພະຍາດ, ໂລຫະໜັກ, ສານເຄມີຕົກຄ້າງ, ການໃຊ້ແນວປະສົມອາຫານ ເພື່ອຮັບປະກັນໃຫ້ສອດຄ່ອງກັບລະບຽບຂອງຈີນ.

**4.5 ການຄວບຄຸມປັດໃຈພາຍນອກ** ບໍລິສັດ ແລະ /ຫຼື ໂຮງສີເຂົ້າຕ້ອງຮັບປະກັນບໍ່ໃຫ້ສິນຄ້າປົນເປື້ອນກັບສິ່ງອື່ນໆ ແລະ ຕ້ອງກວດກາສິນຄ້າຢ່າງສະໝໍ່າສະເໝີ.

**4.6 ນໍ້າທີ່ນໍາໃຊ້ເຂົ້າໃນການຜະລິດ** ບໍລິສັດ ແລະ/ຫຼື ໂຮງສີເຂົ້າ ຕ້ອງໄດ້ກວດກາຄຸນນະພາບ ຂອງນໍ້າທີ່ນໍາໃຊ້ເຂົ້າ

ໃນການຜະລິດ ເພື່ອໃຫ້ສອດຄ່ອງຕາມລະບຽບຄວາມປອດໄພທີ່ວາງອອກ ແລະ ຮັບປະກັນບໍ່ໃຫ້ເກີດມີສານພິດເຈືອປົນ.

**4.7 ການຄວບຄຸມພະຍາດ** ບໍລິສັດ ແລະ/ຫຼື ໂຮງສີເຂົ້າ ຕ້ອງຮັບປະກັນ ການປ້ອງກັນຍຸງ, ແມງວັນ, ໜູ ໃນທຸກຂັ້ນຕອນການຜະລິດ.

**4.8 ການບໍລິຫານການອະນາໄມ ແລະ ຂ້າເຊື້ອພະຍາດ** ບໍລິສັດ/ໂຮງສີເຂົ້າ ຕ້ອງໄດ້ມີເຂດອານາໄມ ແລະ ຂ້າເຊື້ອພະຍາດ, ມີການອານາໄມ ແລະ ຂ້າເຊື້ອເຄື່ອງຈັກທີ່ເໝາະສົມເຊັ່ນ: ການລ້າງ, ການຂ້າເຊື້ອ ແລະ ຮັບປະກັນການເກັບຮັກສາບໍ່ໃຫ້ເກີດເປັນພິດ ພ້ອມນີ້ ບໍລິສັດຕ້ອງມີລະບົບບັນທຶກການເກັບຮັກສາສິນຄ້າຄັກແນ່.

**5. ການບໍລິຫານສິນຄ້າ.**

**5.1 ການກວດກາສິນຄ້າ** ບໍລິສັດ ແລະ/ຫຼື ໂຮງສີເຂົ້າ ຕ້ອງມີມາດຕະການກັກກັນພະຍາດ, ກວດກາອາຫານປອດໄພ ແລະ ຮັບປະກັນ ຄວາມສອດຄ່ອງກັບລະບຽບຂອງ ສປ ຈີນ ແລະ ມີການບັນທຶກຢ່າງເປັນລະບົບ.

**5.2 ວັດສະດຸການຫຸ້ມຫໍ່** ວັດສະດຸການຫຸ້ມຫໍ່ສິນຄ້າ, ກາໝາຍ, ເຄື່ອງໝາຍຕ່າງໆ ຕ້ອງສອດຄ່ອງກັບລະບຽບຂອງ ສປ ຈີນ.

**6. ສາງເກັບຮັກສາສິນຄ້າ:**

6.1 ບໍລິສັດ ແລະ/ຫຼື ໂຮງສີເຂົ້າ ຕ້ອງມີສ້າງສາງເກັບສິນຄ້າທີ່ສາມາດຕອບສະໜອງກັບກຳລັງການຜະລິດທີ່ນຳໃຊ້ລະບົບປິດ-ເປີດ ຮັກສາອຸນຫະພູມ, ຮັກສາຄວາມຊຸ່ມ, ຕ້ອງຖືກຕ້ອງ ຕາມຫລັກອານາໄມ ແລະ ມີການຈັດເກັບທີ່ເໝາະສົມ.

6.2 ຕ້ອງກວດກາສິນຄ້າກ່ອນຮັບເຂົ້າສາງເກັບມ້ຽນ ແລະ ເກັບກຳເວລາສິນຄ້າ ເຂົ້າ-ອອກສາງ.

**7. ການຄວບຄຸມພະຍາດທີ່ເປັນອັນຕະລາຍ:**

**7.1 ການຄວບຄຸມພະຍາດທີ່ເປັນອັນຕະລາຍ** ບໍລິສັດ ແລະ/ຫຼື ໂຮງສີເຂົ້າ ຕ້ອງຮັບປະກັນໃນການປ້ອງກັນພະຍາດທີ່ເປັນອັນຕະລາຍ ເພື່ອບໍ່ໃຫ້ສິນຄ້າເປັນພິດ ພ້ອມທັງມີມາດຕະການຕິດຕາມ, ກວດກາ ແລະ ປ້ອງກັນຕໍ່ພະຍາດທີ່ຝ່າຍຈີນເອົາໃຈໃສ່.

**7.2 ການກວດຫາພະຍາດທີ່ເປັນອັນຕະລາຍ** ກໍລະນີບໍລິສັດ ແລະ/ຫຼື ໂຮງສີເຂົ້າ ຫາກພົບເຫັນພະຍາດທີ່ເປັນອັນຕະລາຍໃນໄລຍະການຜະລິດ ແລະ ເກັບຮັກສາ ບໍລິສັດຕ້ອງມີວິທີໃນການກວດຫາສາເຫດ ຫລື ໃຫ້ພາກສ່ວນທີ່ເປັນຊ່ຽວຊານສະເພາະກວດຫາໃຫ້ ພ້ອມທັງເຮັດບົດບັນທຶກການລົງເຮັດວຽກລະອຽດ.

**7.3 ການປ້ອງກັນພະຍາດ** ບໍລິສັດ ແລະ/ຫຼື ໂຮງສີເຂົ້າຄວນມີລະບົບປ້ອງກັນພະຍາດຢ່າງມີກຳນົດເວລາ ຫລື ໃນເວລາທີ່ຕ້ອງການໃນໄລຍະຜະລິດ ແລະ ເກັບຮັກສາ.

**7.4 ການອົບແຫ້ງ** ບໍລິສັດ ແລະ/ຫຼື ໂຮງສີເຂົ້າ ໃນໄລຍະເກັບຮັກສາ ແລະ ກ່ອນສົ່ງໄປ ສປ ຈີນ ຕ້ອງໄດ້ອົບແຫ້ງໃຫ້ສອດຄ່ອງກັບລະບຽບ ຂອງ ສປ ຈີນ ກ່ອນ, ບໍລິສັດທີ່ບໍລິການອົບແຫ້ງ ຕ້ອງເປັນບໍລິສັດທີ່ໄດ້ມີການຮັບຮອງ ແລະ ໄດ້ຮັບໃບອະນຸຍາດໃຫ້ບໍລິການ.

໘. ຄວາມສາມາດໃນການກວດກາ.

ບໍລິສັດ ແລະ/ຫຼື ໂຮງສີເຂົ້າ ຕ້ອງໄດ້ມີລະບົບກັກກັນພະຍາດ, ຄວາມສາມາດໃນການກວດກາຄວາມປອດໄພຂອງອາຫານ ຫຼື ເຊີນເອົາບໍລິສັດທີ່ໄດ້ມີການຮັບຮອງ ແລະ ໄດ້ຮັບໃບອະນຸຍາດມາໃຫ້ບໍລິການ.

໙. ການຝຶກອົບຮົມ

ບໍລິສັດ ແລະ/ຫຼື ໂຮງສີເຂົ້າ ຕ້ອງໄດ້ກຳນົດເວລາໃນການຝຶກອົບຮົມ ໃຫ້ພະນັກງານໃນການກັກກັນ ແລະ ກວດກາພະຍາດ ທີ່ກ່ຽວຂ້ອງກັບຄວາມປອດໄພຂອງອາຫານ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ ແຈ້ງຕໍ່ ບັນດາຫົວໜ່ວຍທຸລະກິດເຂົ້າ ແລະ/ຫຼື ໂຮງສີເຂົ້າ ຜູ້ທີ່ຈະສົ່ງເຂົ້າ ສານ ໄປຍັງ ສປ ຈີນ ເພື່ອເປັນຂໍ້ມູນໃນການຈັດຕັ້ງປະຕິບັດ, ສ່ວນລາຍລະອຽດ ໃນຂັ້ນຕອນຈັດຕັ້ງປະຕິບັດ ໃຫ້ບັນດາຫົວໜ່ວຍທຸລະກິດເຂົ້າ ແລະ/ຫຼື ໂຮງສີເຂົ້າ ລາວ ປະສານສົມທົບກັບ ກົມສົ່ງເສີມການຄ້າ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້.

ຫົວໜ້າຫ້ອງການ

ນ.ບານສະຕິ ເທບພະວົງ

**ຕິດຕໍ່ພົວພັນ**

ນ.ມະນີຈັນ 020 58888937

# ສົນທິສັນຍາວ່າດ້ວຍ

# ການເພີ່ມທະວີການຮ່ວມມືດ້ານເສດຖະກິດ ແລະ ການຄ້າເຂດຊາຍແດນ

# ລະຫວ່າງ

# ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

# ແລະ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາຊົນຈີນ

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາຊົນຈີນ (ຊຶ່ງຕໍ່ໄປນີ້ເອີ້ນຫຍໍ້ວ່າ: "ສອງຝ່າຍ"),

ໂດຍອ້າງເຖິງ "ສົນທິສັນຍາວ່າດ້ວຍການຄ້າ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສປ ຈີນ" ທີ່ທັງສອງຝ່າຍລົງນາມ ທີ່ ນະຄອນຫຼວງວຽງຈັນ ຄັ້ງວັນທີ 11/06/1997, "ສົນທິສັນຍາວ່າດ້ວຍລະບຽບການຄຸ້ມຄອງຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສປ ຈີນ" ແລະ "ສົນທິສັນຍາວ່າດ້ວຍດ່ານຊາຍແດນ ແລະ ລະບຽບການຄຸ້ມຄອງດ່ານຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສປ ຈີນ" ທີ່ໄດ້ລົງນາມ ທີ່ ນະຄອນຫຼວງປັກກິ່ງ ໃນວັນທີ 23/08/2011 ລະຫວ່າງ ສອງຝ່າຍ;

ໂດຍຄໍານຶງເຖິງການເຊື່ອມຈອດ ທາງດ້ານພູມີສາດ ລະຫວ່າງສອງປະເທດ ແລະ ເພື່ອເສີມຂະຫຍາຍການຮ່ວມມືດ້ານເສດຖະກິດ ແລະ ການຄ້າ ຢູ່ເຂດຊາຍແດນ, ຍົກລະດັບຊີວິດການເປັນຢູ່ ຂອງປະຊາຊົນທີ່ອາໄສຢູ່ຕາມເຂດຊາຍແດນ ລະຫວ່າງສອງປະເທດ ໃຫ້ສູງຂຶ້ນ;

ເພື່ອສືບຕໍ່ສົ່ງເສີມການພົວພັນເສດຖະກິດ ແລະ ການຄ້າ ລະຫວ່າງສອງປະເທດ, ເຮັດໃຫ້ສາຍພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານຂອງສອງປະເທດ ເຂົ້າສູ່ລວງເລິກ,

ໄດ້ຕົກລົງກັນ ດັ່ງນີ້:

## ໝວດທີ 1

## ຫຼັກການພື້ນຖານ

**ມາດຕາ 01**: ສອງຝ່າຍເຫັນດີ ໃຫ້ສືບຕໍ່ເພີ່ມທະວີການຮ່ວມມືດ້ານການຄ້າ, ການລົງທຶນ ແລະ ເສດຖະກິດ ໃນເຂດຊາຍແດນລະຫວ່າງສອງປະເທດ, ລວມທັງການເພີ່ມທະວີການຕິດຕໍ່ພົວພັນຊຶ່ງກັນ ແລະ ກັນ ແລະ ໃຊ້ມາດຕະການເພື່ອຊຸກຍູ້ການພັດທະນາເສດຖະກິດ ແລະ ການຄ້າຊາຍແດນໃຫ້ເຂັ້ມແຂງ ແລະ ຕໍ່ເນື່ອງ ໂດຍສອດຄ່ອງກັບ ກົດໝາຍ, ລະບຽບການຂອງແຕ່ລະປະເທດ ແລະ ສົນທິສັນຍາສະບັບນີ້.

## ໝວດທີ 2

## ການຄ້າຊາຍແດນ

**ມາດຕາ 02**: "ການຄ້າຊາຍແດນ" ໃນສົນທິສັນຍາສະບັບນີ້ ໝາຍເຖິງ ການດໍາເນີນທຸລະກິດການຄ້າຊາຍແດນຂອງບັນດາວິສາຫະກິດ ແລະ ປະຊາຊົນທີ່ອາໄສຢູ່ຕາມເຂດຊາຍແດນລະຫວ່າງສອງປະເທດ ທີ່ເຄື່ອນໄຫວທຸລະກິດຄ້າຂາຍຕາມ

ບໍລິເວນດ່ານຊາຍແດນທາງບົກ ແລະ ດ່ານປະເພນີ ທີ່ທັງສອງຝ່າຍໄດ້ປຶກສາຫາລື ແລະ ຕົກລົງເຫັນດີນຳກັນກ່ຽວກັບການເປີດຕະຫຼາດ ລະຫວ່າງ ແຂວງຫຼວງນໍ້າທາ, ແຂວງອຸດົມໄຊ, ແຂວງຜົ້ງສາລີ ຂອງ ສປປ ລາວ ກັບ ແຂວງຢູນນານ ສປ ຈີນ ໂດຍສອດຄ່ອງກັບລະບຽບການຂອງແຕ່ລະປະເທດ.

**ມາດຕາ 03**: ສອງຝ່າຍເຫັນດີ ການເຄື່ອນໄຫວທຸລະກິດການຄ້າຊາຍແດນຕ້ອງດໍາເນີນຢູ່ດ່ານ ຫຼື ຈຸດແລກປ່ຽນຊື້ຂາຍຂອງປະຊາຊົນເຂດຊາຍແດນທີ່ໄດ້ຕົກລົງເຫັນດີນໍາກັນຈາກສອງຝ່າຍ, ໂດຍໃຫ້ຂະແໜງການປ້ອງກັນ ແລະ ກວດກາຊາຍແດນ, ພາສີ, ກັກກັນພືດ ແລະ ສັດ, ຄົມມະນາຄົມຂົນສົ່ງ, ການຄ້າ ແລະ ຂະແໜງການອື່ນໆຂອງສອງຝ່າຍ ເປັນຜູ້ຈັດຕັ້ງປະຕິບັດຕາມພາລະບົດບາດຂອງຕົນ, ເພື່ອດໍາເນີນການຄຸ້ມຄອງ ແລະ ບໍລິການການເຄື່ອນໄຫວການຄ້າຊາຍແດນຢ່າງມີປະສິດທິພາບ, ລວມທັງຄົນ, ຍານພາຫະນະ, ສິນຄ້າ ແລະ ອື່ນໆ, ຮ່ວມກັນຮັກສາຄວາມເປັນລະບຽບຮຽບຮ້ອຍຕໍ່ກັບການຄ້າຊາຍແດນ.

**ມາດຕາ 04**: ສອງຝ່າຍຮັບຮູ້ວ່າ ການຄ້າຊາຍແດນແມ່ນກວມເອົາສິນຄ້າທຸກຊະນິດ ຍົກເວັ້ນບາງລາຍການສິນຄ້າທີ່ທັງສອງຝ່າຍໄດ້ກໍານົດເປັນສິນຄ້າເກືອດຫ້າມໃນການນໍາເຂົ້າ ແລະ ສົ່ງອອກ, ສໍາລັບລາຍການສິນຄ້າທີ່ຄຸ້ມຄອງດ້ວຍໂກຕ້າ ແລະ ໃບອະນຸຍາດ ແມ່ນໃຫ້ປະຕິບັດຕາມລະບຽບການຂອງແຕ່ລະຝ່າຍ.

ສອງຝ່າຍຕ້ອງເຄົາລົບສົນທິສັນຍາສາກົນທີ່ສາມາດຈັດຕັ້ງປະຕິບັດໄດ້ ຢ່າງເຂັ້ມງວດ, ປະຕິບັດພັນທະດ້ານການປົກປັກຮັກສາສັດປ່າ, ເຄື່ອງປ່າຂອງດົງ, ສິ່ງແວດລ້ອມ ແລະ ປົກປ້ອງສິດຕໍ່ຊັບສິນທາງປັນຍາຢູ່ເຂດຊາຍແດນ, ພ້ອມທັງເພີ່ມທະວີການຄວບຄຸມການຄ້າຊາຍແດນຕໍ່ປະເພດສິ່ງເສດເຫຼືອທີ່ເປັນຂອງແຂງ, ຜະລິດຕະພັນແຊ່ແຂງຈາກເຂດພະຍາດລະບາດ, ສັດ ແລະ ພືດທີ່ໃກ້ຈະສູນພັນ ລວມທັງຜະລິດຕະພັນສໍາເລັດຮູບຂອງມັນ.

**ມາດຕາ 05**: ສອງຝ່າຍເຫັນດີປັບປຸງກົນໄກຮ່ວມມືໃນການສະກັດກັ້ນການຄ້າຂາຍເຖື່ອນ, ສ້າງຕັ້ງໜ່ວຍງານປະສານງານຮ່ວມເພື່ອສະກັດກັ້ນການຄ້າຂາຍເຖື່ອນ, ແລກປ່ຽນຂໍ້ມູນຂ່າວສານດ້ານການຄ້າຂາຍເຖື່ອນຢ່າງທັນການ, ໃຫ້ການຊ່ວຍເຫຼືອດ້ານການລວບລວມຫຼັກຖານ, ຮ່ວມກັນສະກັດກັ້ນການຄ້າຂາຍເຖື່ອນ. ທັງສອງຝ່າຍຮັບຮູ້ວ່າ ຫ້າມບໍ່ໃຫ້ສ້າງຕັ້ງຈຸດກວດກາສິນຄ້ານໍາເຂົ້າ ແລະ ສົ່ງອອກຝ່າຍດຽວ ຢູ່ບ່ອນທີ່ບໍ່ແມ່ນດ່ານພາສີໃນເຂດຊາຍແດນຂອງອີກຝ່າຍໜຶ່ງ.

**ມາດຕາ 06**: ສອງຝ່າຍຮັບຮູ້ວ່າ ການເຄື່ອນໄຫວການຄ້າຊາຍແດນຕ້ອງປະຕິບັດຕາມລະບຽບການ ດ້ານກວດກາສຸຂານາໄມ, ກັກກັນພືດ ແລະ ສັດ, ການກວດກາຄຸນນະພາບສິນຄ້າ ແລະ ຄວາມປອດໄພດ້ານສະບຽງອາຫານ ຂອງແຕ່ລະຝ່າຍ ແລະ ຂໍ້ກໍານົດກ່ຽວກັບຄຸນນະພາບສິນຄ້າທີ່ສອດຄ່ອງກັບມາດຕະຖານຂອງແຕ່ລະຝ່າຍທີ່ທັງສອງຝ່າຍໄດ້ຕົກລົງ ແລະ ລົງນາມຮ່ວມກັນ.

ສອງຝ່າຍເຫັນດີ ມອບສິດໃຫ້ຂະແໜງການກວດກາ, ຂະແໜງກັກກັນພືດ ແລະ ສັດຂອງຕົນ ເປັນຝ່າຍດໍາເນີນການກວດກາ, ກັກກັນພືດ ແລະ ສັດ ຕໍ່ກັບສິນຄ້ານໍາເຂົ້າ ແລະ ສົ່ງອອກຂອງການຄ້າຊາຍແດນ ໂດຍສອດຄ່ອງກັບກົດ

ໝາຍ, ລະບຽບການ ແລະ ມາດຕະຖານຂອງຕົນ, ອອກໃບຢັ້ງຢືນທີ່ກ່ຽວຂ້ອງ ແລະ ນຳໃຊ້ມາດຕະການ ເພື່ອເພີ່ມທະວີການຄຸ້ມຄອງຄຸນນະພາບສິນຄ້າຂອງການຄ້າຊາຍແດນ, ສະກັດກັ້ນການນຳເຂົ້າ ແລະ ສົ່ງອອກ ສິນຄ້າປອມແປງຢ່າງເຂັ້ມງວດໃນການຄ້າຊາຍແດນ.

## ໝວດທີ 3
## ການອຳນວຍຄວາມສະດວກດ້ານການຄ້າຊາຍແດນ

**ມາດຕາ 07**: ສອງຝ່າຍເຫັນດີ:

ກ. ຮ່ວມກັນຊຸກຍູ້ໃນການເປີດຄູ່ດ່ານຊາຍແດນທາງບົກ ລະຫວ່າງສອງຝ່າຍທີ່ມີລະດັບທຽບເທົ່າກັນ;

ຂ. ເພີ່ມທະວີການຮ່ວມມື ກໍ່ສ້າງໂຄງລ່າງພື້ນຖານສຳລັບດ່ານການຄ້າຊາຍແດນ, ຊ່ອງທາງຜ່ານຊົ່ວຄາວ ແລະ ຈຸດແລກປ່ຽນຊື້ຂາຍຂອງປະຊາຊົນເຂດຊາຍແດນ;

ຄ. ເພີ່ມອຸປະກອນ ແລະ ເຄື່ອງມືກວດກາແບບອັດຕະໂນມັດ ສຳລັບຄົນ, ຍານພາຫະນະ ແລະ ອື່ນໆ;

ງ. ປັບປຸງສະຖານທີ່ກວດກາຂອງເຈົ້າໜ້າທີ່ ແລະ ມາດຕະການກ່ຽວຂ້ອງຖ້າຫາກມີຄວາມຈຳເປັນ;

ຈ. ຊຸກຍູ້ພາກສ່ວນຮັບຜິດຊອບການຄ້າຊາຍແດນ ແລະ ອຳນາດການປົກຄອງທ້ອງຖິ່ນທຸກຂັ້ນຢູ່ເຂດຊາຍແດນຂອງແຕ່ລະປະເທດ ເພື່ອເພີ່ມທະວີການປະສານສົມທົບຊຶ່ງກັນ ແລະ ກັນ;

ສ. ຮ່ວມກັນຕິດຕາມກວດກາວຽກງານສຸຂານາໄມ ເຊັ່ນ: ສະບຽງອາຫານ, ນໍ້າດື່ມ, ສະຖານທີ່ສາທາລະນະ ແລະ ອື່ນໆເພື່ອຮັບປະກັນສະພາບແວດລ້ອມໃຫ້ມີຄວາມປອດໄພ;

ຊ. ຊຸກຍູ້ການຮ່ວມມືກ່ຽວກັບວຽກງານອຳນວຍຄວາມສະດວກໃນການບໍລິການຜ່ານດ່ານເຂົ້າ-ອອກ ໃຫ້ມີປະສິດທິຜົນສູງ;

ຍ. ສ້າງຂີດຄວາມສາມາດໃນການຈັດຕັ້ງປະຕິບັດໃຫ້ແກ່ຂະແໜງການກ່ຽວຂ້ອງ ເພື່ອຮັບປະກັນການບໍລິການໃນການຜ່ານດ່ານ ແລະ ໃນການແຈ້ງພາສີ ເຂົ້າ-ອອກ ດ່ານຂອງແຕ່ລະປະເທດໃຫ້ມີປະສິດທິພາບສູງ.

**ມາດຕາ 08**: ສອງຝ່າຍຊຸກຍູ້ພາກສ່ວນຮັບຜິດຊອບທີ່ກ່ຽວຂ້ອງຂອງຕົນ ສະໜອງຂໍ້ມູນດ້ານກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງການຄ້າຊາຍແດນໃຫ້ແກ່ວິສາຫະກິດການຄ້າຊາຍແດນ ແລະ ປະຊາຊົນເຂດຊາຍແດນຢ່າງທັນການ.

ສອງຝ່າຍ ຕ້ອງອຳນວຍຄວາມສະດວກໃຫ້ແກ່ສິນຄ້າ, ບຸກຄົນ, ຍານພາຫະນະໃນການຂ້າມຜ່ານດ່ານຊາຍແດນໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງແຕ່ລະປະເທດ.

**ມາດຕາ 09**: ສອງຝ່າຍ ຈະຕ້ອງສ້າງເງື່ອນໄຂເອື້ອອຳນວຍໃຫ້ແກ່ວິສາຫະກິດການຄ້າຊາຍແດນ ແລະ ປະຊາຊົນຕາມບໍລິເວນເຂດຊາຍແດນ ແລະ ປຸກລະດົມເຂົາເຈົ້າໃຫ້ມີການຄ້າຂາຍພາຍໃນຕະຫຼາດຊາຍແດນຫຼາຍຂຶ້ນ.

**ມາດຕາ 10**: ສອງຝ່າຍຈະບໍ່ອະນຸຍາດໃຫ້ເຈົ້າໜ້າທີ່ ແລະ ອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງຢູ່ເຂດຊາຍແດນ

ເກັບຄ່າທຳນຽມ, ຄ່າບໍລິການ ແລະ ຄ່າໃຊ້ຈ່າຍອື່ນໆ ໂດຍບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງແຕ່ລະປະເທດ.

**ໝວດທີ 4**

**ການຮ່ວມມືເສດຖະກິດ**

**ມາດຕາ 11:** ສອງຝ່າຍຊຸກຍູ້ ໃຫ້ວິສາຫະກິດຂອງສອງປະເທດ ດຳເນີນການກໍ່ສ້າງໂຄງລ່າງພື້ນຖານ ແລະ ການຮ່ວມມືດ້ານການລົງທຶນ ໃນເຂດຊາຍແດນ ລະຫວ່າງສອງປະເທດ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງແຕ່ລະປະເທດ.

**ໝວດທີ 5**

**ການຮ່ວມມືດ້ານການບໍລິການດ້ານການເງິນ-ທະນາຄານໃນເຂດຊາຍແດນ**

**ມາດຕາ 12:** ການຊຳລະສະສາງພາຍໃຕ້ສັນຍາສະບັບນີ້ ສາມາດນຳໃຊ້ ສະກຸນເງິນກີບ, ເງິນຢວນ ຫຼື ສະກຸນເງິນອື່ນ ທີ່ສາມາດແລກປ່ຽນໄດ້ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງແຕ່ລະປະເທດ. ສອງຝ່າຍສົ່ງເສີມໃຫ້ວິສາຫະກິດ ແລະ ປະຊາຊົນເຂດຊາຍແດນ ນຳໃຊ້ສະກຸນເງິນຂອງຕົນເພື່ອຊຳລະສະສາງໃນການດຳເນີນທຸລະກິດການຄ້າຊາຍແດນ ແລະ ການລົງທຶນ.

**ມາດຕາ 13:** ການຊຳລະສະສາງການຄ້າຊາຍແດນຕ້ອງອີງຕາມລະບຽບກົດໝາຍຂອງແຕ່ລະຝ່າຍ, ດ້ວຍຮູບການເອົາສິນຄ້າແລກປ່ຽນສິນຄ້າ, ຊຳລະດ້ວຍເງິນສົດ ຫຼື ໂອນຜ່ານບັນຊີທະນາຄານຕາມການຕົກລົງຂອງຄູ່ຄ້າ. ວິທີການຊຳລະສະສາງສຳລັບການຄ້າຂາຍໃນເຂດຊາຍແດນ ຕ້ອງສອດຄ່ອງກັບລະບຽບຄຸ້ມຄອງເງິນຕາຕ່າງປະເທດທີ່ກ່ຽວຂ້ອງຂອງແຕ່ລະປະເທດ.

**ມາດຕາ 14:** ສອງຝ່າຍຕັ້ງໜ້າສົ່ງເສີມໃຫ້ດຳເນີນການຊຳລະສະສາງການຄ້າຊາຍແດນຜ່ານທະນາຄານທີ່ສອງຝ່າຍໄດ້ອະນຸຍາດ ເພື່ອຊຸກຍູ້ໃຫ້ການຊຳລະສະສາງການຄ້າຊາຍແດນທັນເປັນມາດຕະຖານ.

**ມາດຕາ 15:** ສອງຝ່າຍສົ່ງເສີມໃຫ້ທະນາຄານທຸລະກິດ ຮ່ວມມືກັນສ້າງຕັ້ງສາຂາທະນາຄານ ຫຼື ຈຸດບໍລິການແລກປ່ຽນເງິນຕາຕ່າງປະເທດ ຢູ່ພາຍໃນເຂດຊາຍແດນ ເພື່ອສະໜອງການບໍລິການດ້ານການທະນາຄານ.

**ໝວດທີ 6**

**ການສົ່ງເສີມການຄ້າຊາຍແດນ**

**ມາດຕາ 16:** ສອງຝ່າຍຈະຕ້ອງອຳນວຍຄວາມສະດວກຊຶ່ງກັນ ແລະ ກັນ ໃຫ້ແກ່ພາກສ່ວນທີ່ສະເໜີຈັດກິດຈະກຳຕ່າງໆເພື່ອສົ່ງເສີມການຄ້າຊາຍແດນ ເປັນຕົ້ນ: ງານຕະຫຼາດນັດການຄ້າຊາຍແດນ, ງານພົບປະຫາລື, ງານວາງສະແດງ

ສິນຄ້າ ແລະ ງານພົບປະທຸລະກິດ. ສອງຝ່າຍຈະຊຸກຍູ້ໃນການພັດທະນາຂະແໜງການບໍລິການທີ່ຕິດພັນກັບການຄ້າຢູ່ໃນເຂດຊາຍແດນ.

**ມາດຕາ 17:** ສອງຝ່າຍຄວນນໍາໃຊ້ມາດຕະການຢ່າງຕັ້ງໜ້າ ເພື່ອຊຸກຍູ້ການໄປມາຫາສູ່ກັນຂອງຄົນ ແລະ ການພັດທະນາ ຕະຫຼາດທ່ອງທ່ຽວທີ່ຕິດພັນກັບການຄ້າຊາຍແດນ, ສົ່ງເສີມການພັດທະນາການທ່ອງທ່ຽວນິເວດຂ້າມແດນ; ເປີດກວ້າງການຮ່ວມມືພັດທະນາການເຊື່ອມຈອດດ້ານການທ່ອງທ່ຽວວັດທະນະທໍາ ລະຫວ່າງທ້ອງຖິ່ນຂອງສອງປະເທດລາວ-ຈີນ; ພັດທະນາ ແລະ ໂຄສະນາເຜີຍແຜ່ເສັ້ນທາງທ່ອງທ່ຽວພາກພື້ນ ທີ່ເຊື່ອມຈອດປະເທດລາວ, ຈີນ ແລະ ປະເທດອື່ນໆ.

**ມາດຕາ 18:** ສອງຝ່າຍຕ້ອງອໍານວຍຄວາມສະດວກໃຫ້ແກ່ອົງການຈັດຕັ້ງກ່ຽວຂ້ອງ ທີ່ເຮັດກິດຈະກໍາສົ່ງເສີມການຄ້າດ້ານສິນຄ້າຂ້າມຊາຍແດນ ລວມທັງ ການສຶກສາ ແລະ ສໍາຫຼວດຕະຫຼາດ, ງານຕະຫຼາດນັດ, ງານວາງສະແດງສິນຄ້າ, ການສ້າງຕັ້ງສູນການຄ້າ, ການໂຄສະນາ, ການໃຫ້ຄໍາປຶກສານາຍໜ້າ, ພໍ່ຄ້າຄົນກາງ, ຕົວແທນ ແລະ ການບໍລິການຂອງສອງຝ່າຍຢູ່ໃນຕະຫຼາດຊາຍແດນ.

## ໝວດທີ 7
## ກົນໄກການປະສານງານ

**ມາດຕາ 19:** ສອງຝ່າຍມອບສິດໃຫ້ ກະຊວງອຸດສາຫະກໍາ ແລະ ການຄ້າ ແຫ່ງ ສປປ ລາວ ແລະ ກະຊວງການຄ້າ ແຫ່ງ ສປ ຈີນ ເປັນຜູ້ຈັດຕັ້ງປະຕິບັດສັນຍາສະບັບນີ້.

**ມາດຕາ 20:** ອີງຕາມຄວາມຮຽກຮ້ອງຕ້ອງການຕົວຈິງ, ສອງຝ່າຍມອບໝາຍໃຫ້ພາກສ່ວນກ່ຽວຂ້ອງ ລົງນາມໃນອະນຸສັນຍາລະອຽດ ເພື່ອຈັດຕັ້ງປະຕິບັດສັນຍາສະບັບນີ້. ໃນກໍລະນີຈໍາເປັນ, ສອງຝ່າຍຈະມອບໝາຍໃຫ້ອໍານາດການປົກຄອງທ້ອງຖິ່ນຂັ້ນແຂວງຂອງຕົນ ເຊັນອະນຸສັນຍາລະອຽດທີ່ກ່ຽວຂ້ອງຕື່ມ ໂດຍອີງຕາມຂໍ້ກໍານົດຂອງສັນຍາສະບັບນີ້.

**ມາດຕາ 21:** ເພື່ອຮັບປະກັນການຈັດຕັ້ງປະຕິບັດສັນຍາສະບັບນີ້ ສອງຝ່າຍເຫັນດີ ໃຫ້ພາກສ່ວນຄຸ້ມຄອງການຄ້າຊາຍແດນ, ພາກສ່ວນຄຸ້ມຄອງດ່ານ ແລະ ອໍານາດການປົກຄອງທ້ອງຖິ່ນ, ສ້າງຕັ້ງກົນໄກເຮັດວຽກຮ່ວມກັນລະຫວ່າງຂະແໜງການ ເພື່ອເພີ່ມທະວີການແລກປ່ຽນ ແລະ ປຶກສາຫາລື ຫຼື ໄກ່ເກ່ຍ ແລະ ແກ້ໄຂບັນຫາທີ່ອາດເກີດຂຶ້ນ ໃນການນໍາເຂົ້າ ແລະ ສົ່ງອອກສິນຄ້າ, ການເຂົ້າອອກເມືອງຂອງຄົນ ແລະ ຍານພາຫະນະ ໃຫ້ທັນເວລາ.

## ໝວດທີ 8
## ປະເດັນອື່ນໆ

**ມາດຕາ 22:** ສອງຝ່າຍເຫັນດີ, ສຳລັບປະເດັນອື່ນໆທີ່ບໍ່ທັນລະບຸໄວ້ໃນສັນຍາສະບັບນີ້ ໃຫ້ປະຕິບັດຕາມຂໍ້ກຳນົດທີ່ກ່ຽວຂ້ອງຂອງ "ສັນຍາວ່າດ້ວຍການຄ້າ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສປ ຈີນ", "ສັນຍາວ່າດ້ວຍລະບຽບການຄຸ້ມຄອງຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສປ ຈີນ", "ສັນຍາວ່າດ້ວຍດ່ານຊາຍແດນ ແລະ ລະບຽບການຄຸ້ມຄອງດ່ານຊາຍແດນ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສປ ຈີນ", "ສັນຍາວ່າດ້ວຍການຂົນສົ່ງຜ່ານແດນທາງລົດ ລະຫວ່າງ ລັດຖະບານ ແຫ່ງ ສປປ ລາວ ແລະ ລັດຖະບານ ແຫ່ງ ສປ ຈີນ".

**ມາດຕາ 23:** ໃນກໍລະນີມີຂໍ້ຂັດແຍ່ງເກີດຂຶ້ນ ໃນການຈັດຕັ້ງປະຕິບັດ ແລະ ການຕີຄວາມໝາຍຂອງສັນຍາສະບັບນີ້, ທັງສອງຝ່າຍຕ້ອງແກ້ໄຂດ້ວຍວິທີການປຶກສາຫາລືແບບມິດຕະພາບບົນພື້ນຖານສະເໝີພາບກັນ.

## ໝວດທີ 9
## ການມີຜົນບັງຄັບໃຊ້ ແລະ ການປັບປຸງສັນຍາ

**ມາດຕາ 24:** ສັນຍາສະບັບນີ້ຈະມີຜົນບັງຄັບໃຊ້ໃນມື້ທີ 30 ໂດຍນັບແຕ່ມື້ທີ່ໄດ້ຮັບໜັງສືແຈ້ງສະບັບສຸດທ້າຍ ກ່ຽວກັບການສຳເລັດຂັ້ນຕອນພາຍໃນ ໂດຍຜ່ານຊ່ອງທາງການທູດ.

**ມາດຕາ 25:** ສອງຝ່າຍສາມາດປັບປຸງ ສັນຍາສະບັບນີ້ ໂດຍຜ່ານການແຈ້ງເປັນລາຍລັກອັກສອນ ບົນພື້ນຖານການເຫັນດີເປັນເອກະພາບກັນ. ຫຼັງຈາກຝ່າຍໃດຝ່າຍໜຶ່ງທີ່ໄດ້ຮັບຂໍ້ສະເໜີ ເພື່ອປັບປຸງສັນຍາຈາກອີກຝ່າຍໜຶ່ງ ຕ້ອງແຈ້ງຕອບເປັນລາຍລັກອັກສອນພາຍໃນກຳນົດເວລາ 06 ເດືອນ. ຜົນບັງຄັບໃຊ້ຂອງສັນຍາທີ່ໄດ້ປັບປຸງ ແມ່ນໃຫ້ປະຕິບັດຕາມການກຳນົດໃນມາດຕາ 24.

## ໝວດທີ 10
## ຜົນສັກສິດ

**ມາດຕາ 26:** ສັນຍາສະບັບນີ້ມີຜົນບັງຄັບໃຊ້ເປັນໄລຍະເວລາ 05 ປີ ແລະ ຈະຕໍ່ອາຍຸໂດຍອັດຕະໂນມັດອອກໄປທຸກໆ 03 ປີ ຍົກເວັ້ນກໍລະນີຝ່າຍໃດໜຶ່ງແຈ້ງເປັນລາຍລັກອັກສອນ ທີ່ສະແດງເຈດຈຳນົງຕ້ອງການຢຸດຕິສັນຍາລ່ວງໜ້າ 03 ເດືອນ ກ່ອນວັນສິ້ນສຸດອາຍຸຂອງສັນຍາ.

**ມາດຕາ 27:** ເວລາສັນຍາສະບັບນີ້ໝົດອາຍຸ, ບັນດາໂຄງການ ແລະ ສັນຍາ (contract) ທີ່ໄດ້ຕົກລົງກັນໃນໄລຍະກ່ອນການໝົດອາຍຸຂອງສັນຍານີ້ ແມ່ນໃຫ້ສືບຕໍ່ຈັດຕັ້ງປະຕິບັດຈົນສຳເລັດ.

**ມາດຕາ 28**: ສັນຍາສະບັບນີ້ ບໍ່ໄດ້ມີຜົນກະທົບຕໍ່ສິດ ແລະ ພັນທະຂອງສອງຝ່າຍ ທີ່ລະບຸໄວ້ໃນສັນຍາກ່ຽວຂ້ອງອື່ນໆ ທີ່ສອງຝ່າຍເປັນພາຄີ.

ສັນຍາສະບັບນີ້ ລົງນາມທີ່ ນະຄອນຫຼວງປັກກິ່ງ, ສປ ຈີນ ໃນວັນທີ 28 ເດືອນ ພະຈິກ ປີ 2016, ເປັນສອງ (02) ສະບັບຕົ້ນ, ພາສາລາວ ແລະ ພາສາຈີນ, ທັງສອງສະບັບມີຜົນສັກສິດເທົ່າທຽມກັນ.

**ຕາງໜ້າ ລັດຖະບານ ແຫ່ງ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ທ່ານ ນາງ ເຂັມມະນີ ພົນເສນາ
ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ

**ຕາງໜ້າ ລັດຖະບານ ແຫ່ງ**
**ສາທາລະນະລັດ ປະຊາຊົນຈີນ**

ທ່ານ ກ່າວ ຫູເສີງ
ລັດຖະມົນຕີກະຊວງການຄ້າ

# ຂໍ້ກຳນົດ
# ເງື່ອນໄຂສຸຂານາໄມພືດ ກ່ຽວກັບ ການສົ່ງອອກເຂົ້າ ຂອງ ສປປ ລາວ ໄປ ສປ ຈີນ
# ລະຫວ່າງ
# ກະຊວງ ກະສິກຳ ແລະ ປ່າໄມ້ ແຫ່ງ ສປປ ລາວ
# ແລະ
# ອົງການ ບໍລິຫານ ການຄຸ້ມຄອງ, ກວດກາຄຸນນະພາບ ແລະ ການກັກກັນພືດ ແລະ ສັດ ແຫ່ງ ສປ ຈີນ

ເພື່ອຮັບປະກັນຄວາມປອດໄພໃນການສົ່ງອອກເຂົ້າ ຂອງ ສປປ ລາວ ໄປ ສປ ຈີນ ແລະ ທັງຮັບປະກັນ ຄວາມປອດໄພຂອງຜົນຜະລິດກະສິກຳ, ອຸດສາຫະກຳປ່າໄມ້ ແລະ ນິເວດວິທະຍາຂອງ ສປ ຈີນ ໂດຍອີງໃສ່ຜົນການວິໄຈການປະເມີນ ຄວາມສ່ຽງສັດຕູພືດ ແລະ ຫຼັກການ ຂໍ້ກຳນົດເງື່ອນໄຂ ໃນການນຳໃຊ້ ມາດຕະການສຸຂານາໄມ ແລະ ສຸຂານາໄມພືດ ຂອງອົງການຖຸຄ້າໂລກ ທີ່ກ່ຽວຂ້ອງ (SPS Protocol), ກະຊວງ ກະສິກຳ ແລະ ປ່າໄມ້ ແຫ່ງ ສປປ ລາວ (ຂຽນຫຍໍ້ວ່າ: ຝ່າຍລາວ) ແລະ ອົງການບໍລິຫານ ການຄຸ້ມຄອງ, ກວດກາຄຸນນະພາບ ແລະ ການກັກກັນພືດ ແລະ ສັດ ແຫ່ງ ສປ ຈີນ (ຂຽນຫຍໍ້ວ່າ: ຝ່າຍຈີນ) ຜ່ານການປຶກສາຫາລື ປະສານສົມທົບກັນ ຢ່າງມິດໄມຕີ ແລະ ໄດ້ຕົກລົງ ກ່ຽວກັບ ຂໍ້ກຳນົດ ເງື່ອນໄຂດ້ານ ການກວດກາ ແລະ ກັກກັນ ສຳລັບການນຳເຂົ້າ ເຂົ້າ ຂອງ ສປປ ລາວ ມີຄືດັ່ງນີ້:

## ມາດຕາ 1

ຂໍ້ກຳນົດເງື່ອນໄຂສຸຂານາໄມພືດ ກ່ຽວກັບ ເຂົ້າ ສະບັບນີ້ໝາຍເຖິງ ເຂົ້າສານ (*Oryza sativa* L.), ເຊິ່ງໄດ້ຂັດຂາວແລ້ວ ທີ່ໄດ້ຜ່ານການປຸງແຕ່ງດ້ວຍການສີ ໂດຍ ບໍ່ມີເປືອກ, ແກບ ແລະ ສິ່ງເຈືອປົນອື່ນໆ.

## ມາດຕາ 2

ເຂົ້າສານທີ່ສົ່ງອອກໄປ ສປ ຈີນ ຕ້ອງໃຫ້ສອດຄ່ອງກັບເງື່ອນໄຂສຸຂານາໄມພືດ ຂອງ ສປ ຈີນ ຈະຕ້ອງໄດ້ປັດສະຈາກ ສັດຕູພືດກັກກັນ ທີ່ກ່ຽວຂ້ອງ ຕາມທີ່ຝ່າຍຈີນໄດ້ກຳນົດ (ເບິ່ງເອກະສານ ຄັດຕິດ) ແລະ ສິ່ງເຈືອປົນ ເຊັ່ນ: ຂີ້ແກບ, ຮຳ, ກ້ານຕົ້ນເຂົ້າ, ເສດໃບ, ເມັດຫຍ້າ, ເສດເຫຼືອຊາກສັດ ແລະ ຊິ້ນສ່ວນເມັດດິນ ອື່ນໆ.

ເຂົ້າສານທີ່ສົ່ງອອກໄປ ສປ ຈີນ ຕ້ອງໃຫ້ສອດຄ່ອງກັບ ມາດຕະຖານແຫ່ງຊາດ ແລະ ລະບຽບການກ່ຽວຂ້ອງ ຂອງ ສປ ຈີນ ກ່ຽວກັບ ສານເຄມີຕົກຄ້າງ ທີ່ອະນຸຍາດໃຫ້ ແລະ ສານເປັນພິດທີ່ອັນຕະລາຍ.

## ມາດຕາ 3

ຜູ້ປະກອບການ ທີ່ສົ່ງອອກ, ປຸງແຕ່ງ, ເກັບຮັກສາເຂົ້າ ເພື່ອສົ່ງອອກໄປ ສປ ຈີນ ຈະຕ້ອງໄດ້ຈົດທະບຽນວິສາຫະກິດ ຢູ່ ສປປ ລາວ ເສຍກ່ອນ ແລະ ຈະຕ້ອງໄດ້ເຫັນດີຮັບເອົາ ໂດຍຝ່າຍຈີນ. ບັນຊີການຈົດທະບຽນວິສາຫະກິດ ຈະຕ້ອງໄດ້ລວມເອົາຊື່, ທີ່ຢູ່ ແລະ ລະຫັດທະບຽນວິສາຫະກິດ ສໍາລັບການກວດສອບຄືນຫຼັງໄດ້ຢ່າງຖືກຕ້ອງ ເມື່ອເວລາສົ່ງສິນຄ້າອອກໄປແລ້ວ ບໍ່ເໝາະສົມກັບບົດບັນຍັດຂໍ້ກໍານົດເງື່ອນໄຂ ສະບັບນີ້ ແລະ ບັນຊີຜູ້ປະກອບການ ທີ່ຈົດທະບຽນແລ້ວນັ້ນ ຈະຕ້ອງໄດ້ຈັດສະໜອງ ໂດຍຝ່າຍ ລາວ ໃຫ້ຝ່າຍ ຈີນ ກ່ອນການສົ່ງອອກ ແຕ່ລະ ລະດູການໃນແຕ່ລະປີ.

## ມາດຕາ 4

ຝ່າຍລາວ ຈະຕ້ອງໄດ້ນໍາໃຊ້ ມາດຕະການປ້ອງກັນສັດຕູພືດ ແບບປະສົມປະສານ ແລະ ມາດຕະການ ໃນການຄວບຄຸມ ສັດຕູພືດກັກກັນ ທີ່ກ່ຽວຂ້ອງ ກັບ ສປ ຈີນ ຢູ່ໃນເຂດພື້ນທີ່ປູກເຂົ້າ ເພື່ອແນໃສ່ຫຼຸດຜ່ອນ ການເກີດແຜ່ ຂອງສັດຕູພືດ.

ຝ່າຍລາວ ຈະຕ້ອງໄດ້ດໍາເນີນການ ສໍາຫຼວດສືບຫາ ແມງມອດເຈາະເຂົ້າ ຊະນິດ ຢູ່ຕາມໂຮງສີ ແລະ ໂຮງປຸງແຕ່ງ ເຂົ້າ ແລະ ຈະຕ້ອງໄດ້ຕິດຕັ້ງ ອຸປະກອນກັບດັກ ແມງມອດເຫຼົ່ານີ້ ຢູ່ຕາມໂຮງສີ ແລະ ໂຮງປຸງແຕ່ງ. ຈໍານວນອຸປະກອນກັບດັກແມງມອດນີ້ ຈະຕ້ອງໄດ້ ຕິດຕັ້ງ 1 ອັນ ຕໍ່ ພື້ນທີ່ 100 ຕາແມັດ. ຜົນຂອງການເກັບແມງມອດ ຫຼື ແມງໄມ້ສັດຕູພືດ ທີ່ມາຕິດກັບດັກນັ້ນ ຈະຕ້ອງໄດ້ກວດສອບ ແລະ ຈົດບັນທຶກໄວ້ທຸກໆອາທິດ. ຝ່າຍລາວ ຈະຕ້ອງໄດ້ສະໜອງລາຍງານ ຜົນເຫຼົ່ານີ້ໃຫ້ຝ່າຍຈີນ ຊາບ.

ໃນກໍາມະວິທີປຸງແຕ່ງ, ເກັບຮັກສາ ແລະ ຂົນສົ່ງເຂົ້າ ຂອງລາວ ສໍາລັບສົ່ງໄປ ສປ ຈີນນັ້ນ, ຝ່າຍລາວ ຈະຕ້ອງໄດ້ໃຊ້ມາດຕະການປ້ອງກັນ ເພື່ອບໍ່ໃຫ້ເຂົ້າສານຕົກໄໝກ ຫຼື ມີສິ່ງເຈືອປົນ ຈາກເມັດດິນ, ເສດພືດ, ເມັດຫຍ້າ ຕະຫຼອດຮອດສິ່ງເຈືອປົນອື່ນໆ. ຫ້າມເດັດຂາດ ເພີ່ມຕື່ມ ແບບທຽມ ຫຼື ປະສົມເຂົ້າປົນ ກັບ ສິ່ງເຈືອປົນ ຫຼື ເມັດພືດອື່ນ. ຝ່າຍລາວ ຈະຕ້ອງໄດ້ສະໜອງຂໍ້ມູນ ກ່ຽວກັບ ການຈັດຕັ້ງປະຕິບັດມາດຕະການດັ່ງກ່າວ ຂ້າງເທິງນັ້ນ ໃຫ້ຝ່າຍ ຈີນ.

**ມາດຕາ 5**

ສະຖານທີ່ຫຸ້ມຫໍ່ ແລະ ກຳມະວິທີບັນຈຸຫີບຫໍ່ ເຂົ້າ ເພື່ອສົ່ງອອກໄປ ສປ ຈີນ ຈະຕ້ອງໄດ້ຮັກສາໃຫ້ຢູ່ໃນສະພາບທີ່ສະອາດ ແລະ ປັດສະຈາກ ການຕິດແປດທາງດ້ານຊີວະພາບ ທີ່ອັນຕະລາຍ. ເຂົ້າທີ່ໄດ້ປຸງແຕ່ງ ແລະ ຫຸ້ມຫໍ່ແລ້ວນັ້ນ ຈະຕ້ອງໄດ້ເກັບຮັກສາ ແຍກໄວ້ ຕ່າງຫາກ.

ກ່ອງບັນຈຸເຂົ້າ ເພື່ອສົ່ງອອກໄປ ສປ ຈີນ ຈະຕ້ອງໄດ້ຂຽນຂໍ້ຄວາມໃສ່ ເປັນພາສາຈີນ ແລະ ອັງກິດ ທັງສອງພາສາ ໃຫ້ຂຽນວ່າ: ສົ່ງອອກໄປ ສປ ຈີນ "To the People's Republic of China". ພ້ອມທັງໃຫ້ລະບຸແຈ້ງຂໍ້ມູນ ແນວພັນເຂົ້າ, ໂຮງງານປຸງແຕ່ງ, ຊື່ຜູ້ສົ່ງອອກ, ເລກລະຫັດທະບຽນ ແລະ ທີ່ຢູ່ຂອງໂຮງງານ ດັ່ງກ່າວ.

ພາຫານະຂົນສົ່ງເຂົ້າ ເພື່ອສົ່ງອອກໄປ ສປ ຈີນນັ້ນ, ຈະຕ້ອງໃຫ້ແທດເໝາະກັບ ຂໍ້ກຳນົດເງື່ອນໄຂ ຄວາມສະອາດປອດໄພ ແລະ ຕ້ອງປັດສະຈາກ ສັດຕູພືດກັກກັນທີ່ກ່ຽວຂ້ອງ ຂອງຝ່າຍຈີນ, ປັດສະຈາກຂີ້ແກບ, ກ້ານຕົ້ນເຂົ້າ, ໃບເຂົ້າ, ເມັດຫຍ້າ ແລະ ເມັດດິນເມັດຊາຍ.

**ມາດຕາ 6**

ກ່ອນສົ່ງອອກ, ຝ່າຍລາວ ຈະຕ້ອງໄດ້ດຳເນີນການກວດ ແລະ ເຮັດກັກກັນດ້ານສຸຂານາໄມເຂົ້ານັ້ນເສຍກ່ອນ. ຝ່າຍລາວ ຈະຕ້ອງໄດ້ອອກໃບຢັ້ງຢືນ ສຸຂານາໄມພືດ ໃຫ້ເຂົ້າທີ່ຖືກຕ້ອງຕາມຂໍ້ກຳນົດເງື່ອນໄຂ ຂອງບົດບັນທຶກ ສະບັບນີ້ ແລະ ພິມຂໍ້ຄວາມໃສ່ບ່ອນ ແຈ້ງຂໍ້ມູນເພີ່ມຕື່ມໃນໃບຢັ້ງຢືນສຸຂານາໄມພືດ ວ່າ: "ຊຸດລວມເຂົ້າສົ່ງອອກນີ້ ແມ່ນເໝາະສົມກັບ ຂໍ້ກຳນົດເງື່ອນໄຂສຸຂານາໄມພືດ ກ່ຽວກັບ ການສົ່ງອອກເຂົ້າ ຂອງ ສປປ ລາວ ໄປ ສປ ຈີນ ແມ່ນບໍ່ມີສັດຕູພືດກັກກັນທີ່ກ່ຽວຂ້ອງ ຂອງ ສປ ຈີນ". ຮູບແບບ ແລະ ຂະໜາດ ຂອງໃບຢັ້ງຢືນ ຈະຕ້ອງໄດ້ໃຫ້ສອດຄ່ອງກັບມາດຕະຖານສາກົນ ISPM12, ເຊິ່ງຕົວຢ່າງ ໃບຢັ້ງຢືນສຸຂານາໄມພືດ ຈະຕ້ອງໄດ້ສົ່ງໃຫ້ ສປ ຈີນ ເພື່ອຮັບຮູ້ ແລະ ລົງບັນທຶກໄວ້.

ຝ່າຍຈີນ ຈະໄດ້ກຳນົດອົງກອນໃດໜຶ່ງ ເພື່ອຊ່ວຍປະສານກັບຝ່າຍລາວ ໃນການດຳເນີນການປະຕິບັດສຸຂານາໄມ ການສົ່ງອອກເຂົ້າສານ ຂອງ ສປປ ລາວ ໄປ ສປ ຈີນ.

**ມາດຕາ 7**

ກ່ອນການສົ່ງອອກເຂົ້າ ໄປ ສປ ຈີນ ນັ້ນ ຈະຕ້ອງໄດ້ດຳເນີນການຣົມຢາຂ້າເຊື້ອ, ເພື່ອຮັບປະກັນວ່າ ເຂົ້າສຳລັບສົ່ງໄປ ສປ ຈີນ ບໍ່ມີແມງໄມ້ທີ່ມີຊີວິດ ໂດຍສະເພາະ ແມງໄມ້ສັດຕູພືດໃນເລົ້າສາງ ແລະ ຝ່າຍລາວ ຈະຕ້ອງໄດ້ອອກໃບຢັ້ງຢືນເປັນທາງການ ກ່ຽວກັບການຣົມຢາຂ້າເຊື້ອ. ຢາຣົມຂ້າເຊື້ອ ແລະ ວິທີການເຮັດອານາໄມ ຈະຕ້ອງໄດ້ກຳນົດຂຶ້ນຮ່ວມກັນ ໂດຍສອງຝ່າຍ ກ່ອນການ

ບັນຈຸ ແລະ ຈັດສົ່ງ, ພາຫານະຂົນສົ່ງຈະຕ້ອງໄດ້ດຳເນີນການ ໂດຍຜ່ານການກວດ ແລະ ການຂ້າເຊື້ອພະຍາດ ໃຫ້ລະອຽດ ເພື່ອປ້ອງກັນຊະນິດພະຍາດ ເຊື້ອຊີວະພາບທີ່ອັນຕະລາຍປົນໄປນຳເຂົ້ານັ້ນໄດ້.

**ມາດຕາ 8**

ເມື່ອເວລາເຂົ້າ ຂອງ ລາວ ໄປເຖິງດ່ານນຳເຂົ້າ ສປ ຈີນ ຈະຕ້ອງໄດ້ປະຕິບັດ ການກວດກາ ແລະ ກັກກັນ ຕາມລະບຽບກົດໝາຍຂອງຕົນ. ເຈົ້າໜ້າທີ່ກວດກາ ແລະ ກັກກັນພືດ ປະຈຳດ່ານຈະໄດ້ກວດສອບເບິ່ງເອກະສານ ກ່ຽວກັບ "ໃບຢັ້ງຢືນ ສຸຂານາໄມພືດ *Phytosanitary Certificate*" ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງ ພ້ອມທັງປະຕິບັດການກວດ ແລະ ກັກກັນໃນເວລານຳເຂົ້າ.

**ມາດຕາ 9**

ຝ່າຍລາວ ຕ້ອງຮີບຮ້ອນລາຍງານ ໃຫ້ຝ່າຍຈີນຊາບ ໂດຍທັນທີ ກ່ຽວກັບ ການມີສັດຕູພືດຊະນິດໃໝ່ເກີດຂຶ້ນ ແລະ ການນຳໃຊ້ມາດຕະການກຳຈັດ ທີ່ກ່ຽວຂ້ອງ ໃນກໍລະນີຈຳເປັນ, ພາຍຫຼັງໄດ້ຕົກລົງເຫັນດີໂດຍ ຝ່າຍລາວແລ້ວ, ຝ່າຍຈີນຈະໄດ້ສົ່ງ ຄະນະຊ່ຽວຊານກັກກັນພືດ ມາ ສປປ ລາວ, ເພື່ອຮ່ວມກັນກວດສອບ ການເກີດມີສັດຕູພືດ ຂອງເຂົ້າ ແລະ ການປ້ອງກັນ, ຄວບຄຸມພະຍາດ ແລະ ສັດຕູພືດ ຂອງເຂົ້ານີ້. ໂດຍອີງໃສ່ສະພາບພະຍາດ ແລະ ສັດຕູພືດ ຂອງເຂົ້າທີ່ເກີດຂຶ້ນ ແລະ ສະພາບພົບເຫັນການລະບາດພະຍາດ ແລະ ສັດຕູພືດ, ຝ່າຍຈີນ ຈະໄດ້ດຳເນີນການປະເມີນຄວາມສ່ຽງສັດຕູພືດ ແລະ ທົບທວນຄືນປ້ອນຫຼັງ ຕໍ່ຂໍ້ກຳນົດເງື່ອນໄຂ ດ້ານກັກກັນພືດດັ່ງກ່າວມາແລ້ວນັ້ນຕໍ່ໄປອີກ. ບົນພື້ນຖານການປະສານສົມທົບກັບ ຝ່າຍລາວ, ຝ່າຍຈີນ ຈະໄດ້ປັບປຸງບັນຊີ ສັດຕູພືດກັກກັນ ແລະ ມາດຕະການ ດ້ານກັກກັນພືດ ທີ່ກ່ຽວຂ້ອງ.

**ມາດຕາ 10**

ໃນປີທຳອິດ ພາຍຫຼັງການຄ້າດຳເນີນຂຶ້ນ ຝ່າຍຈີນ ຈະໄດ້ສົ່ງຄະນະຜູ້ຊ່ຽວຊານ ມາເບິ່ງໂຮງງານ ປຸງແຕ່ງ ເຂົ້າ ຂອງ ລາວ ເພື່ອດຳເນີນການສຳຫຼວດສັດຕູພືດ ແລະ ການກວດກາ ການຕຽມການແຈ້ງນຳເຂົ້າ ສປ ຈີນ. ໃນເວລາດຽວກັນ ຖ້າວ່າ ສັດຕູພືດກັກກັນໃດໜຶ່ງ ຖືກກວດພົບໃນເວລານຳເຂົ້າ, ຝ່າຍຈີນ ສາມາດດຳເນີນ ການກວດສອບນີ້ອີກ. ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງ ໃນການສຳຫຼວດ (ລວມທັງຄ່າຂົນສົ່ງ ລະຫວ່າງ ປະເທດ, ການເດີນທາງ, ກິນຢູ່ ແລະ ຄ່າໃຊ້ຈ່າຍທາງການອື່ນໆ) ແມ່ນຜູ້ສົ່ງອອກ ຂອງລາວ ເປັນຜູ້ຮັບຜິດຊອບ ແລະ ຝ່າຍລາວຈະຕ້ອງ ຮັບຜິດຊອບອອກໜັງສືເຊີນ ແລະ ຊ່ວຍຈັດການອຳນວຍຄວາມສະດວກການເດີນທາງໃຫ້ຝ່າຍຈີນ.

**ມາດຕາ 11**

ທັງສອງຝ່າຍ ເຫັນດີເປັນເອກະພາບຮ່ວມກັນວ່າ: ຂໍ້ກຳນົດເງື່ອນໄຂສະບັບນີ້ ແມ່ນບໍ່ຂັດ ແລະ ບໍ່ສົ່ງຜົນສະທ້ອນຕໍ່ການຈັດຕັ້ງປະຕິບັດລະບຽບກົດໝາຍ ຂອງແຕ່ລະປະເທດ.

**ມາດຕາ 12**

ຂໍ້ກຳນົດເງື່ອນໄຂສະບັບນີ້ ມີຜົນນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ມີອາຍຸນຳໃຊ້ 2 ປີ. ຖ້າຫາກກ່ອນຮອດກຳນົດເວລາພາຍໃນ 6 ເດືອນ, ບໍ່ມີຝ່າຍໃດສະເໜີປັບປຸງ ຫຼື ຮຽກຮ້ອງຢຸດຕິ, ຖືວ່າ ຂໍ້ກຳນົດເງື່ອນໄຂນີ້ ແມ່ນມີຜົນສັກສິດນຳໃຊ້ໄປອີກ 2 ປີ ໂດຍອັດຕະໂນມັດ.

ຂໍ້ກຳນົດເງື່ອນໄຂ ສະບັບນີ້, ລົງນາມຄັ້ງວັນທີ 05 ມັງກອນ 2015 ທີ່ນະຄອນຫຼວງປັກກິ່ງ, ປະກອບດ້ວຍ 1 ຊຸດ 2 ສະບັບ, ແຕ່ລະສະບັບຂຽນເປັນ 3 ພາສາຄື: ລາວ, ຈີນ ແລະ ອັງກິດ. ທັງ 3 ພາສາມີຄ່າເທົ່າທຽມກັນ. ຖ້າຫາກມີຄວາມເຂົ້າໃຈແຕກຕ່າງກັນ, ແມ່ນໃຫ້ຖືເອົາ ພາສາອັງກິດເປັນຫຼັກ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ກະຊວງ ກະສິກຳ ແລະ ປ່າໄມ້
ຜູ້ຕາງໜ້າ

ສາທາລະນະລັດ ປະຊາຊົນ ຈີນ
ອົງການ ບໍລິຫານ ການຄຸ້ມຄອງ, ກວດກາ ຄຸນນະພາບ
ແລະ ການກັກ ກັນພືດ ແລະ ສັດ ແຫ່ງ ສປ ຈີນ
ຜູ້ຕາງໜ້າ
吴清海

ເອກະສານຄັດຕິດ:

## ບັນຊີພະຍາດສັດຕູພືດເປັນອັນຕະລາຍທີ່ຝ່າຍຈີນຕ້ອງຫ້າມ

1. *Trogoderma granarium* Everts
2. *Cryptolestes pusilloides* (Stee et Howe)
3. *Prostephanus truncatus* (Horn)
4. *Cenchrus echinatus* (southern sandbur)
5. *Chromolaena odorata* (L.) King & Robinson
6. *Striga asiatica* (L.) O. Kuntze

# ຮ່າງສັນຍາຊື້-ຂາຍ

ສັນຍາເລກທີ: COFCO-xxxx2017xxx

ວັນທີ…………2017

ທີ່ນະຄອນຫຼວງປັກກິ່ງ

ສັນຍາສະບັບນີ້ຖືກສ້າງຂຶ້ນລະຫວ່າງ ບໍລິສັດ China Agri Trading (HK) ຈໍາກັດ (ຊຶ່ງຕໍ່ໄປໃນສັນຍານີ້ເອີ້ນວ່າ "ຜູ້ຊື້" ) ແລະ xxxx (ຊຶ່ງຕໍ່ໄປໃນສັນຍານີ້ເອີ້ນວ່າ "ຜູ້ຂາຍ"), ໂດຍມີຂໍ້ຕົກລົງຈະຊື້ຂາຍສິນຄ້າຮ່ວມກັນ ຕາມຂໍ້ກໍານົດ ແລະ ເງື່ອນໄຂ ດັ່ງຕໍ່ໄປນີ້:

1. **ປະເພດສິນຄ້າ**:

   Xxxx

2. **ຄຸນລັກສະນະ**

   Xxxx

ຜູ້ຊື້ ຖືເອົາການຢັ້ງຢືນຄຸນນະພາບຂອງຕົວຢ່າງສິນຄ້າຈາກ ບໍລິສັດ ກວດກາ ແລະ ຢັ້ງຢືນຄຸນນະພາບຂອງຈີນ ສາຂາປະເທດກໍາປູເຈຍ (China Certificate and Inspection Group Cambodia ຫລື "CCIC") ເພື່ອຮັບຮອງເປັນມາດຕະຖານຂອງສິນຄ້າທີ່ຈະຊື້-ຂາຍ. ສິນຄ້າທີ່ຈະຂາຍຕົວຈິງຈະຕ້ອງມີຄຸນນະພາບເທົ່າກັນ ຫລື ດີກວ່າ ຜົນການຢັ້ງຢືນຂອງສິນຄ້າຕົວຢ່າງທີ່ແຈ້ງໃນເບື້ອງຕົ້ນ.

3. **ປະລິມານ**

ຈໍານວນ Xxxx ໂຕນ (XXx 20' FCL) ຫລືອາດຈະມີປະລິມານທີ່ໜ້ອຍ ຫລື ຫລາຍກວ່າ 5% ຕາມເງື່ອນໄຂຂອງຜູ້ຊື້.

4. **ລາຄາ**

USD XXX/ໂຕນ ເປັນລາຄາ FOB ສົ່ງເຖິງທ່າເຮືອແຫຼມສະບັງ, ປະເທດໄທ ຫຼື ລາຄາ FOB ສົ່ງເຖິງທ່າເຮືອໃດໜຶ່ງ (ໂດຍຜູ້ຂາຍຈະຕ້ອງຮັບຜິດຊອບຄ່າ ຄ່າຍົກ ຫລື ຄ່າເຄື່ອນຍ້າຍຕູ້ສິນຄ້າຢູ່ທ່າເຮືອ

ຊູນແປພາສາ ໂດມອນ ສ່ວນບຸກຄົນ

ນ. ແກ້ວຊົມພູ ສັກດາວົງ
Keoxomphou SAKDAVONG

ຂົນສິນຄ້າ(THC), ຄ່າຄວາມຜັນຜວນຂອງລາຄານ້ຳມັນ (EBS) ແລະ ຄ່າທຳນຽມກວດກາ ແລະ ຄ່າໃຊ້ຈ່າຍໃນການຢັ້ງຢືນຂອງ CCIC).

## 5. ການຂົນສົ່ງ

ເລີ່ມແຕ່ວັນທີ xx ເດືອນ xx ເຖິງເດືອນ xx ປີ 2017 ຈະຕ້ອງໄດ້ກະກຽມການຂົນສົ່ງສິນຄ້າພາຍໃນ 10-15 ມື້ ພາຍຫລັງທີ່ໄດ້ມີການຢັ້ງຢືນລວດລາຍສີສັນຂອງເປົາເພື່ອບັນຈຸເຂົ້າສານທີ່ຈະສົ່ງອອກ.

## 6. ໂຮງສີເຂົ້າ

ເຂົ້າເປືອກຈະຕ້ອງໄດ້ຮັບການສີ ຫລື ປຸງແຕ່ງ ໂດຍບັນດາໂຮງສີ ທີ່ຖືກຮັບຮອງຈາກ ອົງການບໍລິຫານການຄຸ້ມຄອງ, ກວດກາຄຸນນະພາບ ແລະ ການກັກກັນພືດ ແລະ ສັດ (AQSIQ) ຕາມບັນຊີທີ່ຖືກຮັບຮອງໃນເດືອນ 10 ປີ 2015.

## 7. ການຫຸ້ມຫໍ່/ການໃສ່ກາໝາຍ

1) ບັນຈຸດ້ວຍຖົງກັນຄວາມຮ້ອນໃສລຸ້ນໃຫມ່ (Polypropylence) ທີ່ມີນ້ຳໜັກສຸດທິ 25 ກິໂລກະລາມ ຕໍ່ຖົງ, ເຊິ່ງຖົງດັ່ງກ່າວມີນ້ຳໜັກຢ່າງຕ່ຳ 80 ກຼາມ ຕາມທີ່ຜູ້ຊື້ກຳນົດໄວ້ ຫຼື ເປັນການບັນຈຸດ້ວຍຖົງກັນຄວາມຮ້ອນໃສລຸ້ນໃໝ່ ທີ່ມີນ້ຳໜັກສຸດທິ 50 ກິໂລກະລາມ ຕໍ່ຖົງ, ເຊິ່ງຖົງດັ່ງກ່າວມີນ້ຳຫນັກຢ່າງຕ່ຳ 140 ກຼາມ ຕາມທີ່ຜູ້ຊື້ໝາຍໄວ້.
2) ໃນເວລາຈັດສົ່ງຜູ້ຂາຍຕ້ອງສະໜອງຖົງເປົ່າທີ່ມີກາໝາຍເພື່ອສຳຮອງໄວ້ໃນຈຳນວນ 2 ສ່ວນຮ້ອຍ (2 %) ໂດຍບໍ່ຄິດໄລ່ມູນຄ່າ.

## 8. ວິທີການຊຳລະ

ຊຳລະເງິນໂດຍຜ່ານການເປີດ L/C, D/P ຫຼື ການໂອນເງິນ T/T ໂດຍຜູ້ຂາຍຕ້ອງແຈ້ງເອກະສານຂົນສົ່ງຕ່າງໆທີ່ເປັນຕົ້ນສະບັບ ດັ່ງລຸ່ມນີ້:

1) ໃບແຈ້ງລາຍການ ແລະ ລາຄາສິນຄ້າ (Commercial invoice) ຈຳນວນ 3 ສະບັບ ລະບຸ ເຖິງ ບໍລິສັດ China Agri Trading (HK) ຈຳກັດ, ທີ່ຢູ່: 31/F, COFCO Tower, 262 Gloucester Road, Causeway Bay, Hongkong.
2) ລາຍການສິນຄ້າ (packing list) ຈຳນວນ 3 ສະບັບ ທີ່ແຈ້ງເລກຂອງຕູ້ຂົນສົ່ງສິນຄ້າ, ຈຳນວນຖົງ/ເປົາ ທັງໝົດ, ຈຳນວນນ້ຳໜັກສຸດທິ ແລະ ນ້ຳໜັກລວມທັງໝົດຂອງເຂົ້າສານໃນແຕ່ລະຕູ້ຂົນສົ່ງສິນຄ້າ.
3) ຊຸດເອກະສານ ສະບັບຕົ້ນ (3/3) ຂອງໃບຂົນສົ່ງສິນຄ້າທາງທະເລ (Bill of Lading) ທີ່ລະບຸວ່າ "Clean on board" ເຊິ່ງມີຄວາມໝາຍວ່າ "ສິນຄ້າຖືກບັນຈຸໄວ້ເທິງເຮືອແລ້ວ



ສູນແປພາສາ ໂດມອນ ສ່ວນບຸກຄົນ

ນ.ແກ້ວຊົມພູ ສັກດາວົງ
Keoxomphou SAKDAVONG

ເຊິ່ງສິນຄ້າຢູ່ໃນສະພາບຮຽບຮ້ອຍພ້ອມສົ່ງໄປຍັງປາຍທາງ" ແລະ ລະບຸວ່າ "Freight collect" ເຊິ່ງມີຄວາມໝາຍວ່າ "ເກັບຄ່າຂົນສົ່ງສິນຄ້າທີ່ທ່າເຮືອປາຍທາງ", ພ້ອມທັງສໍາເນົາເອກະສານ ຈໍານວນ 3 ສະບັບ ກ່ຽວກັບການຍິນຍອມໃຫ້ມີການສົ່ງມອບໃຫ້ແກ່ຜູ້ຮັບສິນຄ້າ (Non-negotiable with consignee) ແລະ ໃຫ້ແກ່ພາກສ່ວນອື່ນ ຕາມຄວາມຕ້ອງການຂອງຜູ້ຊື້.

4) ໃບຢັ້ງຢືນນໍ້າໜັກ ແລະ ຄຸນນະພາບຂອງສິນຄ້າ (Certificate of Weight and Quality) ອອກໂດຍ ບໍລິສັດ CCIC (CAMBODIA) , ສະບັບຕົ້ນ ຈໍານວນ 1 ສະບັບ ແລະ ສໍາເນົາ 2 ສະບັບ.
5) ໃບຢັ້ງຢືນການຫຸ້ມຫໍ່ (Certificate of Packing) ອອກໂດຍ ບໍລິສັດ CCIC (CAMBODIA) ຈໍາກັດ, ສະບັບຕົ້ນ 1 ສະບັບ ແລະ ສໍາເນົາ 2 ສະບັບ.
6) ໃບຢັ້ງຢືນແນວພັນ (Certificate of Crop) ອອກໂດຍບໍລິສັດ CCIC (CAMBODIA) ຈໍາກັດ, ສະບັບຕົ້ນ 1 ສະບັບ ແລະ ສໍາເນົາ 2 ສະບັບ.
7) ໃບຢັ້ງຢືນຄຸນນະພາບຂອງຕູ້ຂົນສົ່ງສິນຄ້າ(Health certificate of Containers) ອອກໂດຍບໍລິສັດ CCIC (CAMBODIA) , ສະບັບຕົ້ນ 1 ສະບັບ ແລະ ສໍາເນົາ 2 ສະບັບ.
8) ໃບຢັ້ງຢືນສານພິດຕົກຄ້າງຂອງຢາຂ້າສັດຕູພືດ (Certificate of Pesticide Residues) ອອກໂດຍ ບໍລິສັດ CCIC (CAMBODIA) , ສະບັບຕົ້ນ 1 ສະບັບ ແລະ ສໍາເນົາ 2 ສະບັບ.

ສານເຄມີຕົກຄ້າງຢູ່ໃນເຂົ້າສານທີ່ສະໜອງໂດຍຜູ້ຂາຍບໍ່ຄວນມີຈໍານວນເກີນອັດຕາທີ່ກໍານົດໃນກົດລະບຽບຂອງກະຊວງສາທາລະນະສຸກ ຂອງ ສປ ຈີນ ຄື:

1) ສານຕະກົ່ວ (Lead (Pb)) ຄວນມີຄ່າສູງສຸດແມ່ນ 0.2 ມິລີກຼາມ/ກິໂລກຼາມ.
2) ທາດແຄດມຽມ (Cadmium (Cd)) ຄວນມີຄ່າສູງສຸດແມ່ນ 0.2 ມິລີກຼາມ/ກິໂລກຼາມ.
3) ສານ ປລອດ (Mercury (Hg)) ອັດຕາສູງສຸດແມ່ນ 0.02 ມິລີກຼາມ/ກິໂລກຼາມ.
4) ສານໜູ (Abio-arsinic) ອັດຕາສູງສຸດແມ່ນ 0.15 ມິລີກຼາມ/ກິໂລກຼາມ (ຄິດໄລ່ໂດຍອີງໃສ່ເນື້ອໃນຂອງ AS).
5) ສານອາຟາທອກຊິນ (Aflatoxin B1) ອັດຕາສູງສຸດແມ່ນ 1 ໄມໂຄກຣາມ/ກິໂລກຼາມ.

ສູນແປພາສາ ໂດມອນ ສ່ວນບຸກຄົນ

ນ.ແກ້ວຂະນົມ ສັກດາວົງ
Keokomahon SAKDAVONG

9) ໃບຢັ້ງຢືນສຸຂະພາບ (Health Certificate) ອອກໂດຍ ບໍລິສັດ CCIC (CAMBODIA) ຈຳກັດ, ສະບັບຕົ້ນ 1 ສະບັບ ແລະ ສຳເນົາ 2 ສະບັບ.

10) ໃບຢັ້ງຢືນສຸຂະອານາໄມພືດ (Phytosanitary certificate) ອອກໂດຍກົມປູກຝັງ , ກະຊວງກະສິກ□າ ແລະ ປ່າໄມ້ ຂອງ ສປປ ລາວ.

11) ໃບຢັ້ງຢືນການຮົມຢາ (Fumigation certificate) ອອກໂດຍເຈົ້າໜ້າທີ່ກ່ຽວຂ້ອງ.

12) ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ຫຼື ຟອມ E (Certificate of Origin or Form E) ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ.

**ໝາຍເຫດ:**

ເນື່ອງຈາກວ່າໄລຍະເວລາຂອງການຂົນສົ່ງທາງທະເລໄປເຖິງທ່າເຮືອຫຼັກຂອງຈີນ ແມ່ນໄລຍະສັ້ນ, ສະນັ້ນເພື່ອໃຫ້ຜູ້ຊື້ສາມາດກະກຽມຂອດການແຈ້ງພາສີການນຳເຂົ້າໃຫ້ວ່ອງໄວ ທັງສອງພາກສ່ວນຕົກລົງເຫັນດີດຳເນີນການເອກະສານຂົນສົ່ງໃຫ້ວ່ອງໄວຂຶ້ນ ດ້ວຍວິທີການລຸ່ມນີ້:

1) ຜູ້ຂາຍຕ້ອງສົ່ງຮ່າງເອກະສານການຂົນສົ່ງທັງໝົດ ໃຫ້ຜູ້ຊື້ເພື່ອມີການຢືນຢັນກ່ອນການຈັດສົ່ງສິນຄ້າ ຢ່າງຊ້າສຸດ 1 ວັນ ລັດຖະການ.
2) ຜູ້ຂາຍຕ້ອງແຈ້ງເອກະສານຕົ້ນສະບັບແບບຄົບຊຸດ ເຖິງທະນາຄານ ຫຼື ສົ່ງເອກະສານຕົ້ນສະບັບແບບຄົບຊຸດທາງໄປສະນີ ເຖິງຫ້ອງການຂອງຜູ້ຊື້ພາຍໃນ 4 ວັນລັດຖະການ ພາຍຫຼັງວັນທີກຳນົດໃນໃບ B/L.

ເອກະສານການຂົນສົ່ງທັງໝົດຕ້ອງຂຽນເປັນພາສາອັງກິດ.

ຄ່າໃຊ້ຈ່າຍດ້ານທະນາຄານຕ່າງໆທີ່ເກີດຂຶ້ນນອກປະເທດຈີນແມ່ນຜູ້ຂາຍເປັນຝ່າຍຮັບຜິດຊອບ.

## 9. ເງື່ອນໄຂຂໍ້ກຳນົດໃນການຂົນສິນຄ້າທາງເຮືອ

1) ການຈັດສົ່ງສິນຄ້າຈະຕ້ອງແມ່ນດ້ວຍເຮືອບັນທຸກສິນຄ້າ.
2) ຜູ້ຊື້ຈະແຈ້ງຊື່ຂອງເຮືອຂົນສິນຄ້າ, ຕາຕະລາງເດີນເຮືອ ແລະ ຊື່ບໍລິສັດຕົວແທນທີ່ທ່າເຮືອຂົນສົ່ງສິນຄ້າ ໃຫ້ແກ່ຜູ້ຂາຍຮັບຊາບຢ່າງໜ້ອຍ 14 ວັນລ່ວງໜ້າ. ພ້ອມກັນນັ້ນ, ເພື່ອຄວາມແນ່ນອນ ຜູ້ຊື້ຈະສົ່ງອີເມວແຈ້ງໃຫ້ແກ່ຜູ້ຂາຍຊາບ ກ່ຽວກັບຄາດຄະເນໄລຍະເວລາການຂົນສົ່ງສິນຄ້າ ແລະ ພື້ນທີ່ຂອງຕູ້ຂົນສົ່ງສິນຄ້າ ທີ່ສາມາດໝູນໃຊ້ໄດ້ ພາຍໃນ 14 ວັນກ່ອນການຂົນສົ່ງສິນຄ້າຈະມາຮອດຕົວຈິງໃນແຕ່ລະຄັ້ງຂອງການຂົນສົ່ງ.

ສົມແປພາສາ ໂດຍ ສ່ວນບຸກຄົນ

ນ.ແກ້ວຊົມພູ ສັກດາວົງ
Keoxomphou SAKDAVONG

3) ຜູ້ຂາຍຈະສົ່ງມອບ ສິນຄ້າ/ຕູ້ຂົນສົ່ງສິນຄ້າ ໄປບ່ອນລານທີ່ເກັບຕູ້ຄອນເທນເນີ້ທີ່ຖືກກຳນົດໄວ້ ກ່ອນການອອກຈາກທ່າຕົ້ນທາງຂອງເຮືອຂົນສົ່ງສິນຄ້າ ແລະ ກ່ອນເວລາປິດລານຕູ້ຄອນເທນເນີ້. ຄ່າໃຊ້ຈ່າຍໃນການຂົນສົ່ງສິນຄ້າຂຶ້ນເຮືອແມ່ນຜູ້ຂາຍເປັນຝ່າຍຮັບຜິດຊອບ.

4) ຜູ້ຂາຍຈະແຈ້ງຂໍ້ມູນຜົນການຂົນສົ່ງສິນຄ້າລົງເຮືອ ເຊັ່ນ: ເຮືອຂົນສົ່ງອອກຈາກທ່າຕົ້ນທາງ ແລະ ປະລິມານຂອງເຂົ້າສານຕົວຈິງທີ່ຈະຖືກຂົນສົ່ງໃຫ້ຜູ້ຊື້ຮັບຊາບຜ່ານທາງແຟັກສ ຫຼື ອີເມວ ພາຍໃນ 1 ວັນລັດຖະການ ຫຼັງຈາກເຮືອຂົນສິນຄ້າອອກຈາກທ່າເຮືອ.

5) ຜູ້ຂາຍຈະສົ່ງສຳເນົາເອກະສານ B/L ແລະ ໃບແຈ້ງລາຍການສົ່ງສິນຄ້າ ໃຫ້ຜູ້ຊື້ ຜ່ານທາງແຟັກ ຫຼື ອີເມວ ພາຍໃນ 1 ວັນລັດຖະການຫຼັງຈາກເຮືອຂົນສິນຄ້າອອກທ່າເຮືອຕົ້ນທາງ.

6) ຜູ້ຂາຍຕ້ອງປູພື້ນທາງໃນຂອງຕູ້ຂົນສົ່ນຄ້າດ້ວຍສານດູດຄວາມຊຶ້ນ (silica gel), ເຈ້ຍກາຟ້ (Kraft paper). ປູເຈ້ຍ Kraft ໃສ່ 6 ດ້ານຂອງຕູ້ຄອນເທນເນີ້. ກາວ ຫຼື ຢາງກາວ ຫຼື ວັດຖຸຢາງໜຽວຊະນິດອື່ນໆ ແມ່ນບໍ່ອະນຸຍາດໃຫ້ໃຊ້. ແຕ່ສາມາດໃຊ້ສາຍສະກັອດມັດໄດ້. ສານດູດຄວາມຊຶ້ນ (silica gel) ຫຼືເຈວແຫ້ງ ຄວນຖູໃສ່ທຸກຕູ້ຂົນສິນຄ້າ (8 ກິໂລກຼາມຕໍ່ຕູ້) ເພື່ອດູດຊຶມຄວາມຊຸ່ມ.

7) ສານດູດຄວາມຊຸມ (silica gel), ເຈ້ຍ Kraft ແລະ ຄ່າຍົກ/ວາງ/ເຄື່ອນຍ້າຍຕູ້ຂົນສົ່ງສິນຄ່າ ຢູ່ ທ່າເຮືອ (THC) ທີ່ໃຊ້ຢູ່ທ່າເຮືອຂົນສິນຄ້າແມ່ນຜູ້ຂາຍເປັນຝ່າຍຮັບຜິດຊອບ.

8) ຄ່າປະກັນໄພແມ່ນຜູ້ຊື້ເປັນຝ່າຍຮັບຜິດຊອບ.

## 10. <u>ການສຳຫຼວດ</u>

ການຄວບຄຸມດູແລ, ການສຳຫຼວດເຂົ້າສານທີ່ໂຮງສີ, ສາງເກັບຮັກສາ ແລະ ການຂົນສົ່ງຂຶ້ນເຮືອຂົນສົ່ງສິນຄ້າ. ຄຸນນະພາບ, ນ້ຳໜັກ ແລະ ເງື່ອນໄຂການຫຸ້ມຫໍ່ ແມ່ນດຳເນີນການໂດຍບໍລິສັດ CCIC (CAMBODIA).

1) ກໍລະນີຜູ້ສຳຫຼວດພົບວ່າເຂົ້າສານທີ່ຈະທຳການຂົນສົ່ງ ມີກິ່ນເໝັນ, ປຽກນ້ຳ, ກິ່ນບູດ ແລະ ຄວາມຮ້ອນ, ຈະບໍ່ມີການຂົນສົ່ງເຂົ້າສານຈຳນວນດັ່ງກາວ. ດ້ວຍເຫດນີ້, ຄວາມເສຍຫາຍຕ່າງໆ ເນື່ອງຈາກຕູ້ບັນທຸກສິນຄ້າຫວ່າງເປົ່າ ຜູ້ຂາຍຕ້ອງເປັນຝ່າຍຮັບຜິດຊອບທັງຫມົດ.

2) ຜູ້ຂາຍຕ້ອງຍິບຖົງ/ເປົາ ທັງໝົດທີ່ເກີດຄວາມເສຍຫາຍໃນລະຫວ່າງການຂົນສິນຄ້າຂຶ້ນເຮືອ ດ້ວຍເຊືອກປໍຝັ້ນ ຫຼື ເສັ້ນຝ້າຍ, ແລະ ປ່ຽນແທນຖົງ/ເປົາ ທັງໝົດທີ່ໄດ້ຮັບຄວາມເສຍຫາຍຫລາຍ.

3) ຜູ້ຂາຍຈະຕ້ອງມີຕົວແທນຜູ້ທີ່ກວດກາເຮືອຂົນສິນຄ້າຈົນກວ່າສິນຄ້າໄດ້ອອກຈາກທ່າເຮືອ.

ນ.ແກ້ວຊົມພູ ສັກດາວົງ
Keoxomohou SAKDAVONG

4) ບໍລິສັດ CCIC (CAMBODIA) ຈະອອກໃບຢັ້ງຢືນດ້ານຄຸນນະພາບ ແລະ ປະລິມານຂອງເຂົ້າສານທີ່ໄດ້ຂົນສົ່ງ ພາຍໃນ 3 ວັນລັດຖະການ ຫຼັງຈາກວັນທີທີ່ກຳນົດໃນ B/L. ຜູ້ຂາຍຈະໄດ້ຮັບສຳເນົາໃບຢັ້ງຢືນດັ່ງກ່າວ 2 ສະບັບ.
5) ການຣົມຄວັນກັນເຊື້ອພະຍາດ ຄວນຖືກດຳເນີນການໂດຍບໍລິສັດທີ່ໄດ້ຮັບການຮັບຮອງຈາກໜ່ວຍງານທີ່ກ່ຽວຂ້ອງຂອງລາວ ແລະ ອີງການ AQSIQ ຂອງຈີນ ໂດຍເປັນຄວາມຮັບຜິດຊອບຂອງຜູ້ຊື້. ເວລາສຳລັບການດຳເນີນການຣົມຄວັນຂ້າເຊື້ອພະຍາດແມ່ນຂຶ້ນກັບການກຳນົດຂອງບໍລິສັດທີ່ຖືກຮັບຮອງດັ່ງກ່າວ ໂດຍຈະອີງຕາມເງື່ອນໄຂສະພາບຂອງອາກາດ ແລະ ເຂົ້າ. ຫຼັງຈາກທີ່ມີການຣົມຄວັນຂ້າເຊື້ອພະຍາດແລ້ວ ຕ້ອງມີການອອກໃບອະນຸມັດຢັ້ງຢືນ.
6) ຄ່າໃຊ້ຈ່າຍໃນການສຳຫຼວດແມ່ນຜູ້ຂາຍເປັນຜູ້ຮັບຜິດຊອບ.
7) ຄ່າໃຊ້ຈ່າຍໃນການຣົມຄວັນກັນເຊື້ອພະຍາດແມ່ນຜູ້ຂາຍເປັນຜູ້ຮັບຜິດຊອບ.
8) ຜູ້ຊື້ໄດ້ຮັບສິດໃນການປະຕິເສດບໍ່ຮັບສິນຄ້າທີ່ເຂດທ່າເຮືອປ່ອຍສິນຄ້າ (ທ່າເຮືອເປົ້າໝາຍຂອງຜູ້ຊື້), ຖ້າວ່າສິນຄ້າທີ່ມາຮອດມີຄວາມບິດເບືອນທາງດ້ານຄຸນນະພາບຈາກຕົວຢ່າງທີ່ໄດ້ລະບຸໄວ້ໃນສັນຍາ ໂດຍ ບໍລິສັດ CCIC (CAMBODIAN), ຜູ້ຊື້ ແລະ ຜູ້ຂາຍ ທັງສອງຝ່າຍຈະແຕ່ງຕັ້ງນັກກວດສອບອິດສະລະ ເປັນຜູ້ສຳຫລວດກວດສອບຄືນ.

## 11. <u>ການຮ້ອງຂໍແທນຄືນສິນຄ້າ</u>

ຫຼັງຈາກທີ່ສິນຄ້າມາເຖິງປາຍທາງ, ຜູ້ຊື້ ມີສິດກວດຄືນສະພາບສິນຄ້າດັ່ງກ່າວ. ຖ້າມີການຄົ້ນພົບວ່າມີການບິດເບືອນຢ່າງໃດຢ່າງໜຶ່ງຈາກທີ່ໄດ້ກຳນົດໃນການຂົນສິນຄ້າທາງດ້ານຄຸນນະພາບ ຫຼື ນ້ຳໜັກຂອງສິນຄ້າໂດຍ CIQ ທີ່ເຂດປ່ອຍສິນຄ້າ ຜູ້ຊື້ຈະແຈ້ງມາຍັງຜູ້ຂາຍຊາບທັນທີ. ເພື່ອແກ້ໄຂບັນຫາດັ່ງກ່າວ, ຜູ້ຊື້ ແລະ ຜູ້ຂາຍຈະຮ່ວມກັນແຕ່ງຕັ້ງໜ່ວຍງານກວດສອບອິດສະຫຼະທີ່ເປັນທີ່ຍອມຮັບ ເພື່ອກວດສອບສິນຄ້າຄືນ. ສຳລັບການຄາດເຄື່ອນດ້ານຄຸນນະພາບ, ຜູ້ຊື້ຈະໄດ້ຮັບສິດໃນການຟ້ອງຮ້ອງຜູ້ຂາຍສຳລັບຄ່າຊົດເຊີຍຄວາມເສຍຫາຍ ຫຼື ການປ່ຽນແທນສິນຄ້າ ພາຍໃນ 45 ວັນ ຫຼັງຈາກມີການກວດສອບ ແລະ ຢັ້ງຢືນ ຈາກໜ່ວຍງານກວດສອບອິດສະລະ (ເຊັ່ນ: ໜ່ວຍງານກວດສອບ SGS).

## 12. <u>ການຕັດສິນທາງດ້ານກົດໝາຍ</u>

1) ຖ້າເກີດມີຂໍ້ຂັດແຍ້ງຕ່າງໆ ທີ່ກ່ຽວຂ້ອງຈາກການປະຕິບັດຕາມສັນຍາສະບັບນີ້ແມ່ນຈະມີການຕົກລົງຈັດການກັນເອງໂດຍການເຈລະຈາຕໍ່ລອງ. ຖ້າທັງສອງຝ່າຍບໍ່ສາມາດຍຸດຕິຂໍ້ຂັດແຍ່ງໂດຍການເຈລະຈາຮ່ວມກັນໄດ້, ຂໍ້ຂັດແຍ້ງດັ່ງກ່າວຈະຖືກສະເໜີໄປຍັງຄະນະກຳມະການຕັດສິນທາງດ້ານກົດໝາຍ. ຄະນະກຳມະການດັ່ງກ່າວຈະປະກອບດ້ວຍຜູ້ໄກ່ເກ່ຍຕັດສິນ 2 ທ່ານ, ຜູ້ທີໜຶ່ງ ແມ່ນຄົນສັນຊາດຈີນຖືກແຕ່ງຕັ້ງໂດຍຜູ້ຊື້, ອີກຜູ້ໜຶ່ງ ແມ່ນ



ສູນແປພາສາ ໄດນອນ ຮ່ວມບຸກຄົນ ຫລວງ

ນ.ແກ້ວຊົມພູ ສັກດາວົງ
Keoxomphou SAKDAVONG

ຖືກແຕ່ງຕັ້ງໂດຍຜູ້ຂາຍ ເຊິ່ງຄະນະກຳມະການດັ່ງກ່າວຈະໄດ້ຮັບການເຫັນດີ ແລະ ຖືກແຕ່ງຕັ້ງ ໂດຍທັງສອງຝ່າຍ ຜູ້ຊື້ ແລະ ຜູ້ຂາຍ. ສະຖານທີ່ຕັດສິນໄກ່ເກ່ຍຈະດຳເນີນ ຢູ່ ສູນຕັດສິນດ້ານກົດໝາຍສາກົນຂອງຮ່ອງກົງ. ສຳຫຼັບຄ່າໃຊ້ຈ່າຍໃນການຕັດສິນໄກ່ເກ່ຍຈະແມ່ນຝ່າຍເສຍຄະດີເປັນຜູ້ຮັບຜິດຊອບ ຜ່ານການຕັດສິນຈາກຄະນະກຳມະການການຕັດສິນດ້ານກົດໝາຍ.

2) ສັນຍາສະບັບນີ້ຈະໄດ້ຖືກແປ, ດຳເນີນການ ແລະ ຕີຄວາມໝາຍ ໂດຍອີງຕາມກົດໝາຍສະບັບພາສາອັງກິດ.

3) ຖ້າຫາກບໍ່ໄດ້ແຈ້ງລາຍລະອຽດໃນສັນຍາສະບັບນີ້, ການຂົນສົ່ງແມ່ນນຳໃຊ້ຮູບແບບ FOB ໂດຍອີງຕາມຫລັກການເປັນທາງການຂອງ ສະພາການຄ້າສາກົນ ສຳລັບເງື່ອນໄຂຂໍ້ກຳນົດດ້ານການຄ້າ ສະບັບປີ 2010 (INCOTERMS 2010)

**13. <u>ເຫດການສຸດວິໄສ (FORCE MAJEURE)</u>**

ຜູ້ຊື້ ຫຼື ຜູ້ຂາຍ ຈະບໍ່ມີຄວາມຜິດໃນທຸກກໍລະນີໃດໆທີ່ເກີດຈາກເຫດການທີ່ເໜືອການຄວບຄຸມຂອງພວກເຂົາເຈົ້າ ຫລື ເຫດສຸດວິໄສ ເຊິ່ງເຮັດໃຫ້ບໍ່ສາມາດປະຕິບັດຕາມສັນຍາສະບັບນີ້ໄດ້ ໃນລະຫວ່າງມີການດຳເນີນການສັນຍາ, ແຕ່ວ່າຜູ້ຊື້ ຫຼື ຜູ້ຂາຍ ຈະຕ້ອງໄດ້ຮັບການຢັ້ງຢືນຈາກເຈົ້າໜ້າທີ່ລັດຖະບານຂັ້ນທ້ອງຖິ່ນ ຫຼື ສະພາການຄ້າ ຫຼື ຜູ້ກວດສອບຂອງພາກລັດຕໍ່ເຫດການດັ່ງກ່າວ.

**<u>ຜູ້ຊື້</u>** **<u>ຜູ້ຂາຍ</u>**

ບໍລິສັດ China Agri Trading ຈຳກັດXXXX

ສູນແປພາສາ
ໂດມອນ
ສ່ວນບຸກຄົນ

ນ.ແກ້ວຊົມພູ ສັກດາວົງ
Keoxomphou SAKDAVONG



ການສົ່ງອອກສັດໃຫຍ່ໄປ ສປ ຈີນ (ງົວ, ຄວາຍ)

**Illustration The Model Of Yunnan Transboundary Animal Health Management**

## 进境屠宰用肉牛“3+3”管理模式图
## ແຜນວາດຮູບແບບຄຸ້ມຄອງແບບ “3 ບວກ 3” ສຳລັບງົວຄວາຍຂ້າທີ່ນຳເຂົ້າ



# 老挝进口肉牛检验检疫流程图

ຕາຕະລາງຂັ້ນຕອນຂອງການກວດກາ ແລະ ກັກກັນພະຍາດສຳລັບງົວຄວາຍທີ່ນຳເຂົ້າຈາກລາວ



<u>**ຟາມລ້ຽງທົ່ວໄປ**</u>

1. ຟາມລ້ຽງສັດໃຫຍ່ ຕ້ອງໄດ້ຮັບການອະນຸຍາດຈາກການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ. ຕ້ອງຕັ້ງຢູ່ສະຖານທີ່ເໝາະສົມ, ນ້ຳບໍ່ຖ້ວມຂັງໃນຍາມ ຝົນຕົກ ພື້ນຄອກຄວນຍົກສູງກວ່າພື້ນດິນເດີມປະມານ 30-40 cm ຢູ່ຫ່າງໄກຈາກຊຸມຊົນ ເຂດພະຍາດປາກເປື່ອຍລີບເລັບ ໂຮງຂ້າສັດ ແລະ ບໍ່ສ້າງຜົນກະທົບໃດໆຕໍ່ຊີວິດການເປັນຢູ່ຂອງຄົນທ້ອງຖິ່ນນັ້ນ.

2. ມີພື້ນທີ່ ແລະ ສະພາບແວດລ້ອມ ຕ້ອງອຳນວຍຄວາມສະດວກຢ່າງຊັດເຈນ ແລະ ເໝາະສົມເຊັ່ນ: ມີທົ່ງຫຍ້າ, ໂຮງເຮືອນ, ຄອກສັດ, ສາງເກັບຮັກສາອາຫານສັດ ແລະ ມີຮົ້ວກັ້ນອ້ອມຮອບ ເພື່ອຄວາມປອດໄພໃນທຸກຮອບດ້ານ.

3. ສັດໃຫຍ່ອາດຈະເປັນ ສາຍພັນພື້ນເມືອງ ຫຼື ສາຍພັນປັບປຸງ ຫຼື ສາຍພັນປະສົມ ເຊິ່ງມີນ້ຳໜັກຫຼາຍກ່ວາ 350 Kg, ອາຍຸບໍ່ເກີນ 4 ປີ. ນອກຈາກນັ້ນ, ຕ້ອງມີຖິ່ນກຳເນີດຢູ່ ສປປ ລາວ ຫຼື ສັດທີ່ນຳເຂົ້າແຕ່ຕ້ອງຖືກລ້ຽງຢູ່ ປະເທດລາວຢ່າງໜ້ອຍ 150 ວັນ.

4. ສຳລັບສະຖານທີ່ລ້ຽງ ແມ່ນຕ້ອງເປັນຟາມທີ່ໄດ້ຈົດທະບຽນຢູ່ ສປປ ລາວ ຢ່າງຖືກກົດໝາຍ ແລະ ອີງຕາມເອກະສານ ເລກທີ 0209/ກປ, ລົງວັນທີ 06 ກຸມພາ 2013;

5. ສັດໃຫຍ່ ຈະນຳໄປບ່ອນເຂດທ້ອນໂຮມສັດ 45 ວັນ ຕ້ອງບໍ່ໃຫ້ມີປະຫວັດກວດພົບເຊື້ອພາຍໃນ 6 ເດືອນ ເຊັ່ນ: ໂລກຜິວໜັງ, ໂລກປອດອັກເສບ, ວັນນະໂລກ ແລະ ອື່ນໆ. ຈຶ່ງສາມາດຂົນສົ່ງໄປລ້ຽງຢູ່ເຂດທ້ອນໂຮມສັດໃຫຍ່ໄດ້.

6. ພື້ນໂຮງເຮືອນຄວນເປັນພື້ນຊີເມັນ, ລາດອຽງ, ບໍ່ມື່ນ ສາມາດທຳຄວາມສະອາດ ແລະ ຂ້າເຊື້ອໄດ້ຢ່າງສະດວກ ແລະ ມີລະບົບລະບາຍນ້ຳທີ່ດີ, ໂຮງເຮືອນສຳລັບທອມສັດໃຫຍ່ ອາດເປັນຄອກດ່ຽວ ຫຼື ຄອກລວມ ແລ້ວແບ່ງເປັນສັດສ່ວນຢ່າງເໝາະສົມກັບລຸ້ນ, ຂະໜາດ ແລະ ຈຳນວນສັດທີ່ລ້ຽງ.





<u>ຟາມທ້ອນໂຮມສັດ</u>

<u>ມາດຕະຖານສຳລັບຟາມທ້ອນໂຮມສັດໃຫຍ່</u>

1. ເປັນບ່ອນເຂດເຕົ້າໂຮມສັດ (ຟາມ) ແລະ ເຂດລ້ຽງສັດ 45 ວັນ.

2. ເຂດເຕົ້າໂຮມສັດ (ຟາມ) ໄລຍະ 50 ກິໂລແມັດນັບຈາກນັ້ນ ຕ້ອງໃຫ້ທຳການສັກຢາປ້ອງກັນພະຍາດປາກເປື່ອຍລີ້ນເລັບສັດລ້ຽງ.

3. ຕ້ອງມີຂະໜາດການຜະລິດທີ່ແນ່ນອນ, ຕ້ອງໃຫ້ສອດຄ່ອງ ຕາມມາດຕະຖານຄວາມປອດໄພທາງຊີວະ ແລະ ໄດ້ຮັບການອະນຸມັດຂອງກະຊວງກະສິກຳ ແລະ ປ່າໄມ້.

4. ສັດໃຫຍ່ ເພດຜູ້ຕ້ອງໄດ້ແຍກລ້ຽງຈາກເພດແມ່ ບໍ່ໃຫ້ຢູ່ຮ່ວມກັນ.

5. ໃນໄລຍະ 06 ເດືອນ ຈະສົ່ງອອກຟາມດັ່ງກ່າວ ຈຳນວນສັດຕ້ອງບໍ່ພົບເຊື້ອພະຍາດເຊັ່ນ: ພະຍາດຜິວໜັງອັກເສບ, ພະຍາດປອດອັກເສບ, ພະຍາດງົວບ້າ, ພະຍາດປາກເປື່ອຍລີ້ນເລັບ, ພະຍາດແທ້ງລູກ, ພະຍາດວັນນະໂລກ, ພະຍາດໄຂ້ເລືອດດຳ ແລະ ພະຍາດອະຫິວາສັດຄ້ຽວເອື້ອງນ້ອຍ.

<u>ຂໍ້ກຳນົດໃນເຂດກັກກັນ ແລະ ກວດກາສຸຂະພາບສັດໃຫຍ່</u>

1. ສັດໃຫຍ່ແຕ່ລະໂຕຕ້ອງໄດ້ຕິດລະຫັດປະຈຳຕົວ ແລະ  ເປັນລະຫັດທີ່ກົມພາສີຮັບຮູ້.

2. ຕ້ອງຮັບປະກັນວ່າ  ສັດໃຫຍ່ເພດແມ່ບໍ່ໃຫ້ຖືພາ.

3. ສັດໃຫຍ່ທຸກໂຕຕ້ອງໄດ້ຜ່ານການກວດສຸຂະພາບໃນແຕ່ລະມື້ ແລະຕ້ອງບໍ່ສະແດງອາການຂອງພະຍາດລະບາດສັດ ແລະ ພະຍາດແມ່ກາຝາກໃດໆ.

4. ສັດໃຫຍ່ທີ່ນຳເຂົ້າມາລ້ຽງໃນຟາມທ້ອນໂຮມສັດ ຕ້ອງໄດ້ສັກຢາກັນພະຍາດເຕົ້າໂຮມເລືອດ ງົວ, ຄວາຍ ແລະ ພະຍາດປາກເປື່ອຍລີ້ນເລັບຄັ້ງທຳອິດ ໝົດທຸກໂຕ ແລະ ຕ້ອງໄດ້ສັກຢາກັນພະຍາດປາກເປື່ອຍລີ້ນເລັບຊ້ຳຄືນເປັນຄັ້ງທີ່ສອງ ຂັ້ນຕອນສັກຢາກັນພະຍາດ ຕ້ອງປະຕິບັດຕາມວິທີການຍອມຮັບ ຂອງກະຊວງກະສິກຳ ແລະ ປ່າໄມ້ ແລະ ກົມໃຫຍ່ພາສີ.

5. ກ່ອນຈະສົ່ງສັດມາເຂດດັ່ງກ່າວ ເພື່ອເຕົ້າໂຮມສັດ ຕ້ອງໄດ້ທຳການກວດເລືອດ ເກັບຕົວຢ່າງ ແລະ ສົ່ງເຂົ້າວິໄຈພະຍາດສັດ ຖ້າມີການຢັ້ງຢືນວ່າສັດຕິດເຊື້ອ, ກະຊວງກະສິກຳ ແລະ ປ່າໄມ້ ຕ້ອງແຈ້ງໃຫ້ກົມໃຫຍ່ພາສີຈີນ ຮັບຊາບໂດຍດ່ວນ ແລະ ບໍ່ອະນຸຍາດໃຫ້ສັດເຂົ້າໄປບ່ອນກັກກັນສັດໄດ້ ໃນໄລຍະ 30 ວັນ.

6. ຕ້ອງນຳໃຊ້ຢາຂ້າແມ່ກາຝາກທີ່ອອກລິດເປັນວົງກວ້າງ ຖ່າຍພະຍາດແມ່ກາຝາກ ທີ່ສອງຝ່າຍຍອມຮັບ.

7. ພາຫະນະ ແລະ ອຸປະກອນ ທີ່ນຳໃຊ້ເຂົ້າໃນການຂົນສົ່ງສັດ ຈາກຟາມທ້ອນໂຮມ ໄປຫາ ຟາມກັກກັນສັດກ່ອນການສົ່ງອອກ ຕ້ອງໄດ້ທຳຄວາມສະອາດ ແລະ ຂ້າເຊື້ອພະຍາດ ດ້ວຍຢາຂ້າເຊື້ອ ທີ່ໄດ້ຮັບອະນຸຍາດໂດຍກະຊວງກະສິກຳ ແລະ  ປ່າໄມ້.

 

## ເງື່ອນໄຂຕະຫຼາດ ສປ ຈີນ

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຊອບໃນການກັກກັນ ແລະ ກວດສຸຂະພາບສັດໃຫຍ່ທີ່ຈະສົ່ງອອກ ໄປ ສປ ຈີນ ແລະ ອອກໃບຢັ້ງຢືນສຸຂະພາບສັດ ດັ່ງລຸ່ມນີ້:

### I. ໃບຢັ້ງຢືນສຸຂະພາບສັດ ປະກອບດ້ວຍ:

1. ສັດໃຫຍ່ທີ່ຈະສົ່ງອອກ ຕ້ອງໃຫ້ສອດຄ່ອງກັບເງື່ອນໄຂຂອງການກັກກັນທີ່ໄດ້ກຳນົດໄວ້.
2. ຈຳນວນສັດໃຫຍ່ ທີ່ສົ່ງອອກແຕ່ລະໂຕ ຕ້ອງມີລະຫັດປະຈຳຕົວພຽງລະຫັດດຽວ.
3. ຕ້ອງມີໃບຢັ້ງຢືນຜົນການກວດທາງດ້ານອາການສະແດງອອກພາຍນອກຂອງສັດ.
4. ໃຫ້ລະບຸຊື່, ປະລິມານ ແລະ ວັນເດືອນປີ ທີ່ໃຊ້ຂ້າແມ່ກາຝາກ.
5. ວັນເວລາຂົນສົ່ງ, ຊື່ດ່ານນຳອອກ, ຮູບແບບ ແລະ ພາຫະນະໃນການຂົນສົ່ງ, ປ້າຍທະບຽນ ຂອງພາຫະນະ ພ້ອມດ້ວຍຊື່ຢາຂ້າເຊື້ອ ແລະ ວັນເວລາທີ່ໃຊ້ຂ້າເຊື້ອພາຫະນະ.
6. ຊື່ ແລະ ທີ່ຢູ່ຂອງຜູ້ສົ່ງອອກ ແລະ ນຳເຂົ້າ.
7. ວັນທີ ອອກໃບຢັ້ງຢືນສຸຂະພາບສັດ, ລາຍເຊັນ ແລະ ຊື່ ເປັນໂຕພິມ ຂອງເຈົ້າໜ້າທີ້ສັດຕະວະແພດ ກະຊວງກະສິາ ແລະ ປ່າໄມ້.
8. ໃບຢັ້ງຢືນສຸຂະພາບສັດ ຕ້ອງໄດ້ປະທັບກາ ຂອງກະຊວງກະສິກຳ ແລະ ປ່າໄມ້ ຢ່າງເປັນທາງການ

## ເຂດກັກກັນສັດ

### ຂໍ້ກຳນົດຂອງເຂດກັກກັນສັດກ່ອນການສົ່ງອອກ

1. ແມ່ນເຂດກັກກັນສັດໄລຍະ 30 ວັນ ເພື່ອກະກຽມສົ່ງສັດອອກໄປ ສປ ຈີນ.
2. ຟາມກັກກັນສັດກ່ອນການສົ່ງອອກ ຕ້ອງຕັ້ງຢູ່ ໃນບໍລິເວນເຂດປອດພະຍາດປາກເປື່ອຍລີ້ງເລັບໃນຂອບເຂດ 5,6 ກິໂລຕາແມັດ ທີ່ກົມໃຫຍ່ພາສີຮັບຮອງ.
3. ຟາມກັກກັນສັດກ່ອນສົ່ງອອກ ຕ້ອງໃຫ້ສອດຄ່ອງກັບ ຂໍ້ກຳນົດຂອງສະຖານທີ່ກັກກັນ ເພື່ອນຳເຂົ້າສັດໃຫຍ່ແບ້ ແລະ ແກະ (ຕາມມາດຕະຖານການກັກກັນ ແລະ ກວດກາສຸຂະພາບ ຂອງ ສປ ຈີນ ເລກທີ SN/T 4233-2015). ຮັບຮອງຈາກກະຊວງກະສິກຳ ແລະ ປ່າໄມ້ ແລະ ກົມໃຫຍ່ພາສີ.
4. ຟາມກັກກັນສັດກ່ອນການສົ່ງອອກ ຕ້ອງຢູ່ພາຍໃຕ້ການຊີ້ນຳ ຂອງກະຊວງກະສິກຳ ແລະ ປ່າໄມ້ ຢ່າງມີປະສິດທິຜົນ.

### ຂໍ້ກຳນົດໃນເຂດກັກກັນ ແລະ ກວດສຸຂະພາບສັດ

1. ເຈົ້າໜ້າທີ່ສັດຕະວະແພດ ກະຊວງກະສິກຳ ແລະ ປ່າໄມ້ ຕ້ອງໄດ້ເອົາໃຈໃສ່ກວດສຸຂະພາບສັດດ້ານອາຫານ, ກວດເບີຫູສັດ ແລະ ກວດການບັນທຶກການສັກຢາກັນພະຍາດສັດແຕ່ລະໂຕ ກ່ອນການຂົນສົ່ງສັດມາເຖິງເຂດກັກກັນສັດກ່ອນສົ່ງອອກ. ກໍລະນີພົບເຫັນ ສັດສະແດງອາການໃດໜຶ່ງຂອງພະຍາດລະບາດສັດ ຫຼື ພະຍາດແມ່ກາຝາກຕ້ອງຄັດອອກຈາກຝູງໂດຍທັນທັນ.
2. ສັດທີ່ນຳເຂົ້າໄປໃນຟາມກັກກັນສັດກ່ອນການສົ່ງອອກ ຕ້ອງແຍກລ້ຽງຕ່າງຫາກ ເປັນແຕ່ລະຊຸດ.
3. ຫຍ້າທີ່ໃຫ້ສັດກິນ ແລະ ໃຊ້ຮອງພື້ນໃນໄລຍະເວລາກັກກັນ ຕ້ອງນຳມາຈາກບ່ອນທີ່ໄດ້ຮັບຮອງຈາກກົມໃຫຍ່ພາສີ ແລະ ບໍ່ໄດ້ນຳມາຈາກເຂດທີ່ມີກຳລັງມີການຄວບຄຸມພະຍາດ ງົວ ຄວາຍ ທີ່ຈຳເປັນຕ້ອງແຈ້ງ.
4. ສັດໃຫຍ່ທີ່ຈະສົ່ງອອກຕ້ອງໄດ້ກວດຫາທາດກາຍຕ້ານ ພາຍຫຼັງການສັກຢາກັນພະຍາດໂດຍອີງໃສ່ມາດຕະຖານ ທີ່ກົມໃຫຍ່ພາສີໃຫ້ການຮັບຮອງ.

**II. ໃບຢັ້ງຢືນສຸຂະພາບສັດ**

ຕ້ອງເຮັດເປັນສະບັບຕົ້ນ 1 ສະບັບ ແລະ ສຳເນົາອີກ 2 ສະບັບ, ສະບັບຕົ້ນຕ້ອງໄດ້ຕິດໃບຢັ້ງຢືນການສັກຢາກັນພະຍາດສັດທີ່ກ່ຽວຂ້ອງ ແລະ ຕ້ອງຕິດຕາມໄປນຳການຂົນສົ່ງສັດໃຫຍ່ທີ່ຈະສົ່ງອອກ. ຕ້ອງພິມທັງພາສາຈີນ ແລະ ພາສາອັງກິດ, ການຂຽນ ຫຼື ພິມໃບຢັ້ງຢືນຕ້ອງໃຫ້ຊັດເຈນຈະແຈ້ງ (ນອກຈາກລາຍເຊັນຂອງເຈົ້າໜ້າທີ່ສັດ ຕະວະແພດ), ຫາກພົບເຫັນມີການດັດແປງຖືວ່ານຳໃຊ້ບໍ່ໄດ້.

**III. ສັດໃຫຍ່ທີ່ໄດ້ຂົນສົ່ງມາຮອດດ່ານຂາເຂົ້າຂອງຝ່າຍຈີນ**

ຕ້ອງມີໃບຢັ້ງຢືນສຸຂະພາບສັດທີ່ມີຜົນສັກສິດຕິດຕາມມານຳ, ຖ້າເຫັນວ່າໃບຢັ້ງຢືນສຸຂະພາບສັດບໍ່ຖືກຕ້ອງ ຫຼື ບໍ່ມີໃບຢັ້ງຢືນສຸຂະພາບສັດເລີຍ, ສັດໃຫຍ່ນັ້ນຈະສົ່ງກັບຄືນ ຫຼື ທຳລາຍຖິ້ມໂດຍກົມໃຫຍ່ພາສີ.

**<u>ດ້ານການບໍລິການ ແລະ ອັດຕາພາສີ</u>**

1. ການສົ່ງອອກອາດຈະມີຄ່າທຳນຽມ ການນຳເຂົ້າ-ສົ່ງອອກສັດໃຫຍ່ຕາມລະບຽບການ ເພື່ອຮັບປະກັນການປະຕິບັດວຽກງານການນຳເຂົ້າ-ສົ່ງອອກໃຫ້ມີຄວາມຄ່ອງແຄ້ວ, ຮັບປະກັນບໍ່ໃຫ້ມີການເກັບຄ່າທຳນຽມອື່ນໆ ທີ່ບໍ່ຖືກຕ້ອງຕາມລະບຽບການທີ່ກຳນົດ.

2. ເອກະສານໃນການສົ່ງອອກພາຍໃຕ້ຂອບເຂດການຄ້າເສລີ ອາຊຽນ-ຈີນ. ເພື່ອຂໍໃບຢັ້ງຢືນແຫຼ່ງກຳເນີດສິນຄ້າປະເພດສັດໃຫຍ່ ສາມາດຂໍຈາກກະຊວງອຸດສາຫະກຳ ແລະ ການຄ້າ ຫຼື ສະພາການຄ້າ ແລະ ອຸດສາຫະກຳແຂວງ.

3. ສຳລັບສັດທີ່ເກີດໃນ ສປປ ລາວ ທີ່ຕ້ອງການສົ່ງອອກ ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ CO, ກໍລະນີຖ້າແມ່ນນຳເອົາສັດນ້ອຍມາລ້ຽງຫອມ ໂດຍໃຊ້ເວລາລ້ຽງໃດໜຶ່ງ ແລ້ວຈຶ່ງສົ່ງອອກນັ້ນຈະໄດ້ໃບ CO ຂາວ ບາງປະເທດແມ່ນຈະຍົກເວັ້ນພາສີ ແຕ່ບາງປະເທດ ກໍ່ເກັບພາສີ 10%.

4. ລະຫັດອັດຕາພາສີ 0102.29.10 ອັດຕາພາສີ MFN-Lao (Most Eavorable Nations (WTO)-Lao ) ອັດຕາພາສີ 10% (ວັນ 01/01/2020-31/12/2023) ACFTA (ເຂດການຄ້າເສລີ ອນຊຽນ-ຈີນ) ອັດຕາພາສີ 0% (ວັນທີ 01/01/2020-31/12/2020).



